# ພາສາລາວລ້ານຊ້າງ I

## ກ່ອນປີ ພ.ສ ໒໔໗໘; ຄ.ສ ໑໙໓໕

### ສະບັບຄົ້ນຄວ້າ




ຮິບໂຮມ ແລະ ຮຽບຮຽງ

ໂດຍ


ສົມຈິດ ພັນລັກ



ໄດ້ຮັບອະນຸຍາດພິມຈາກ ກົມພິມຈຳໜ່າຍ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຕາມທະບຽນເລກທີ ໒໕໕/ພຈ ລົງວັນທີ ໐໒/໐໗/໒໐໑໒
ພິມປີ ພ.ສ ໒໕໕໕, ຄ.ສ ໒໐໑໒, ພິມຈຳນວນ ໕໐໐໐ ເຫຼັ້ມ
ສົນໃຈຢາກເປັນໂຕແທນຈຳໜ່າຍ ໂທ: ໕໖໕໗໘໕໑໘, ໕໘໘໕໖໐໙
ສະຫງວນລິຂະສິດ, ເລກທີ 114 ລົງວັນທີ 19/08/2013

# ພາສາລາວລ້ານຊ້າງ

## ກ່ອນປີ ພ.ສ ໒໔໗໘; ຄ.ສ ໑໙໓໕
## ສະບັບຄົ້ນຄວ້າ


**ຮິບໂຮມ ແລະ ຮຽບຮຽງ**

**ໂດຍ**

**ສົມຈິດ ພັນລັກ**



ໄດ້ຮັບອະນຸຍາດພິມຈາກ ກົມພິມຈຳໜ່າຍ ກະຊວງຖະແຫຼງຂ່າວ,
ວັດທະນະທຳ ແລະ ທ່ອງທ່ຽວ
ຕາມທະບຽນເລກທີ ໒໕໕/ພຈ ລົງວັນທີ ໐໒/໐໗/໒໐໑໒
ພິມປີ ພ.ສ ໒໕໕໕/ຄ.ສ ໒໐໑໒, ພິມຈຳນວນ ໕໐໐໐ ເຫຼັ້ມ
ສົນໃຈຢາກເປັນໂຕແທນຈຳໜ່າຍໂທ:໕໖໕໗໘໕໑໘,໕໘໘໕໖໐໙໗



ສະຫງວນລິຂະສິດເລກທີ ໑໑໔,ລົງວັນທີ ໑໙/໐໗/໒໐໑໓

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------

ສຳນັກງານນາຍົກລັດຖະມົນຕີ ເລກທີ ໑໐ /ນຍ

# ຄຳສັ່ງແນະນຳ
## ຂອງນາຍົກລັດຖະມົນຕີ
### ວ່າດ້ວຍການຈັດຕັ້ງຄົ້ນຄວ້າ ຫຼັກການພາສາລາວ

ເຖິງ: ທ່ານລັດຖະມົນຕີວ່າການ ກະຊວງຖະແຫຼງຂ່າວ-ວັດທະນະທຳ ແລະ ທ່ານລັດຖະມົນຕີວ່າການ ກະຊວງສຶກສາທິການ.

ພວກເຮົາຮັບຮູ້ແລ້ວວ່າ: ວິວັດທະນາການຂອງພາສາລາວເຮົາ ແມ່ນຕິດພັນກັບປະຫວັດສາດຂອງຄວາມເປັນຊາດ ທີ່ມີອະລິຍະທຳມາແຕ່ບູຮານນະການ. ໃນແຕ່ລະຍຸກສະໄໝ ບັນດານັກປາດອາຈານຜູ້ດີເດັ່ນ ແລະ ມີຄວາມຮັກໃນພາສາຂອງຊາດຕົນ ກໍໄດ້ຂຽນໄວ້ໃນສີລາຈາລຶກ, ບັນທຶກໄວ້ໃນຄຳພີໃບລານ ຈຳນວນຫຼາຍໝື່ນຫຼາຍແສນຜູກ,ເຊິ່ງມາຮອດມື້ນີ້ ສິ່ງເຫຼົ່ານັ້ນ ບໍ່ພຽງແຕ່ເປັນຊັບສົມບັດອັນລ້ຳຄ່າ ທາງດ້ານວັດທະນະທຳ, ພາສາ,ວັນນະຄະດີຂອງຊາດ,ຫາກຍັງເປັນແຫຼ່ງຂໍ້ມູນທາງວິຊາການໃຫ້ແກ່ການຄົ້ນຄວ້າ, ເສີມຂະຫຍາຍໃຫ້ອຸດົມຮັ່ງມີສືບຕໍ່ໄປ.

ໃນຫຼາຍປີມານີ້, ກະຊວງກ່ຽວຂ້ອງ ພ້ອມດ້ວຍບັນດານັກຄົ້ນຄວ້າ,ຄູອາຈານພຣະສົງອົງຄະເຈົ້າ ແລະ ຜູ້ສະຫງວນຮັກທາງດ້ານພາສາ,ວັນນະຄະດີລາວ ກໍໄດ້ມີການຄົ້ນຄວ້າປະດິດຄິດແຕ່ງ ແລະ ຈັດພິມໃຫ້ເປັນປຶ້ມອ່ານ,ຕຳລາ ແລະ ເອກະສານຕ່າງໆ,ອັນໄດ້ກາຍເປັນຫຼັກສູດສິດສອນຢູ່ຕາມໂຮງຮຽນ, ເປັນຄູ່ມືທາງວິຊາການ ເພື່ອການຄົ້ນຄວ້າ ແລະ ທັງເປັນການສືບຕໍ່ພັດທະນາພາສາລາວເຮົາ ໃຫ້ໄປຄຽງຄູ່ກັບການຂະຫຍາຍຕົວ ທາງດ້ານການເມືອງ,ເສດຖະກິດ, ສັງຄົມ ແລະ ວິທະຍາສາດເຕັກນິກຢູ່ປະເທດເຮົາ. ດັ່ງນັ້ນ,ເພື່ອເຮັດໃຫ້ການນຳໃຊ້ຫຼັກການທາງດ້ານພາສາສາດຂອງລາວເຮົາມີບ່ອນອີງອັນຖືກຕ້ອງ ແລະ ເປັນເອກະພາບກັນໃນທົ່ວປະເທດ.

ນາຍົກລັດຖະມົນຕີ ມີຄໍາສັ່ງແນະນໍາດັ່ງນີ້:

໑. ໃຫ້ກະຊວງຖະແຫຼງຂ່າວ-ວັດທະນະທໍາ ເປັນເຈົ້າການສົມທົບກັບກະຊວງສຶກສາທິການ ຈັດຕັ້ງຄະນະກໍາມະການໜຶ່ງຂຶ້ນ ເພື່ອຄົ້ນຄວ້າຫຼັກພາສາລາວ.

ຄະນະກໍາມະການດັ່ງກ່າວ ປະກອບດ້ວຍພະນັກງານວິຊາການ ຈາກກະຊວງກ່ຽວຂ້ອງ ແລະ ຈາກພາກສ່ວນອື່ນ ທີ່ເຫັນວ່າມີຄວາມຮອບຮູ້ ທາງດ້ານພາສາລາວ.ພ້ອມກັນນັ້ນກໍໃຫ້ເຊື້ອເຊີນບັນດາຜູ້ຊົງຄຸນວຸດທິ,ພຣະສົງອົງຄະເຈົ້າຜູ້ມີຄວາມຮູ້ທາງດ້ານພາສາສາດ,ເພື່ອຍາດແຍ່ງຄວາມຄິດຄວາມເຫັນ ແລະໃຫ້ຄໍາປຶກສາຕ່າງໆ.

ຄະນະກໍາມະການດັ່ງກ່າວ ມີໜ້າທີ່ຈັດຫາ,ລວບລວມ,ຄົ້ນຄວ້າ ແລະວາງອອກໃນເບື້ອງຕົ້ນ.ເອກະສານກ່ຽວກັບຫຼັກພາສາລາວ ເພື່ອເປັນບ່ອນອີງໃຫ້ແກ່ການປຶກສາຫາລື ແລະ ຍາດແຍ່ງຄວາມຄິດເຫັນນໍາບັນດາຜູ້ຊົງຄຸນວຸດທິແລະ ບັນດາຜູ້ຮອບຮູ້ອື່ນໆ,ຈາກນັ້ນຈຶ່ງນໍາສະເໜີໃຫ້ລັດຖະບານຮັບຮອງເອົາຄະນະກໍາມະການຄົ້ນຄວ້າຫຼັກພາສາລາວ ຕ້ອງມີໂຄງການວຽກງານ, ມີລະບອບວິທີເຮັດວຽກ ແລະມີການແບ່ງງານກັນຢ່າງຈະແຈ້ງ ໂດຍແມ່ນກະຊວງຖະແຫຼງຂ່າວ-ວັດທະນະທໍາ ແລະ ກະຊວງສຶກສາທິການເປັນຜູ້ຕິດຕາມ,ຊຸກຍູ້ແລະ ສ້າງເງື່ອນໄຂສະດວກດ້ານງົບປະມານ ແລະ ພາຫະນະວັດຖຸອຸປະກອນທີ່ຈໍາເປັນຕ່າງໆ, ຄະນະດັ່ງກ່າວມີຫ້ອງການປະຈໍາຢູ່ກະຊວງຖະແຫຼງຂ່າວ-ວັດທະນະທໍາ.

໒. ການຄົ້ນຄວ້າເພື່ອກໍານົດຫຼັກການພາສາລາວ ດ້ານພື້ນຖານແມ່ນໃຫ້ອີງໃສ່ໝາກຜົນແຫ່ງການຄົ້ນຄວ້າຂອງນັກປາດອາຈານ ແລະ ຜູ້ຮອບຮູ້ດ້ານອັກສອນສາດພາສາລາວຮຸ່ນກ່ອນໆເຊັ່ນ: ເຈົ້າເພັດຊະລາດ,ມະຫາແກ້ວ,ສົມຈິນ ປີແອ້ງງິນ, ມະຫາສີລາວິລະວົງ, ທ່ານພູມີວົງວິຈິດ ແລະ ຜູ້ອື່ນໆ.

໓. ການກໍານົດເຄົ້າມູນພາສາລາວ ໂດຍຫຼັກແມ່ນໃຫ້ຖືເອົາ ພາສາລາວເປັນພື້ນຖານ ແລະ ອີງໃສ່ພາສາປາລີ-ສັນສະກິດ, ພ້ອມກັນນັ້ນ ກໍໃຫ້ສົມທົບເປັນຢ່າງດີ ລະຫວ່າງການນໍາໃຊ້ພາສາລາວເດີມ ກັບການນໍາໃຊ້ພາສາລາວສະໄໝໃໝ່ ແລະ ການຂະຫຍາຍຕົວຂອງພາສາທາງດ້ານການເມືອງ,ເສດຖະກິດ, ວັດທະນະທໍາ, ສັງຄົມ ແລະ ວິທະຍາສາດເຕັກນິກ.

໔. ກະຊວງຖະແຫຼງຂ່າວ-ວັດທະນະທຳ ແລະ ກະຊວງສຶກສາທິການ ມີໜ້າທີ່ ຊີ້ນຳ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໂດຍກົງ, ບັນດາກະຊວງ ແລະ ຂະແໜງການກ່ຽວຂ້ອງອື່ນໆ ເປັນຜູ້ປະສານສົມທົບ ແລະ ສ້າງເງື່ອນໄຂສະດວກ ໃຫ້ແກ່ສອງກະຊວງດັ່ງກ່າວ ເຮັດສຳເລັດໜ້າທີ່ຂອງຕົນເປັນຢ່າງດີ.

ວຽງຈັນ,ວັນທີ໐໔ /໐໙/໑໙໙໔

ນາຍົກລັດຖະມົນຕີແຫ່ງ ສປປ ລາວ

ຄຳໄຕ ສີພັນດອນ

# ຄຳເຫັນ

## ຂອງທ່ານ ສະຫວັນຄອນ ຣາຊມຸນຕຣີ
## ລັດຖະມົນຕີ ຊ່ວຍວ່າການກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ

ໃນບັນດາປະເທດແຖບອາຊີຕະເວັນອອກສ່ຽງໃຕ້ ຫຼື ໃນກຸ່ມປະເທດອາຊຽນນີ້ ລາວເຮົາກໍເປັນປະເທດໜຶ່ງທີ່ມີອະຣິຍະທຳ ແລະ ວັດທະນະທຳອັນເປັນຂອງຕົນເອງມາຕັ້ງແຕ່ດຶກດຳບັນ, ໃນນັ້ນ ວັດທະນະທຳທາງດ້ານພາສາປາກເວົ້າ, ພາສາຂີດຂຽນ ຫຼື ທີ່ເຮົາເອີ້ນວ່າພາສາສາດນັ້ນ ກໍເປັນວັດທະນະທຳອັນ ຍອດຍິ່ງອັນໜຶ່ງເຊິ່ງໄດ້ຖືກປະຍຸກ, ປັບປຸງ ແລະ ປ່ຽນແປງໄປຕາມສະພາບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມຂອງແຕ່ລະຍຸກສະໄໝ.

ຕາມທີ່ໄດ້ອ່ານເບິ່ງເນື້ອໃນພາສາລາວລ້ານຊ້າງ ຫຼື ໄວຍາກອນລາວເຫຼັ້ມນີ້ແລ້ວ ຂ້າພະເຈົ້າເຫັນວ່າມີສາລະປະໂຫຍດ ແລະ ມີທັງຄວາມອຸດົມສົມບູນພໍສົມຄວນ, ເຖິງແມ່ນວ່າຈະມີໄຕອັກສອນຫຼາຍໄຕແຕ່ຄິດວ່າບໍ່ເຫຼືອວິໄສຂອງຄົນລາວໃນຍຸກປັດຈຸບັນ ທີ່ມີຄວາມຮູ້, ຄວາມສາມາດສູງ ໃນການສຶກສາຄົ້ນຄວ້າໃຫ້ຮູ້ເຖິງແກ່ນແທ້ຂອງພາສາສາດຂອງຊາດຕົນເອງ ເຊິ່ງເປັນພາສາທີ່ມີລັກສະນະວິທະຍາສາດກ້າວໜ້າບໍ່ດ້ອຍກວ່າພາສາຂອງຊາດອື່ນໃດໃນໂລກ, ສາມາດປຽບທຽບກັບພາສາສາກົນໄດ້ຢ່າງຄ່ອງແຄ້ວ ແລະ ຍັງຈະຊ່ວຍໃຫ້ຄົນລາວເຮົາຮຽນພາສາສາກົນໄດ້ງ່າຍ ແລະ ສະດວກຂຶ້ນ.

ຂ້າພະເຈົ້າ ຂໍສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ຜົນງານການຄົ້ນຄວ້າຂອງທ່ານ **ສົມຈິດພັນລັກ** ທີ່ມີຄວາມພາກພຽນພະຍາຍາມເປັນຢ່າງສູງ ໃນການສຶກສາຄົ້ນຄວ້າຈຶ່ງສາມາດເກັບກໍາ, ຮຶບໂຮມ ແລະ ຮຽບຮຽງປຶ້ມພາສາລາວລ້ານຊ້າງເຫຼັ້ມນີ້ຂຶ້ນມາໄດ້ ອັນເປັນການປະກອບສ່ວນທີ່ສຳຄັນທີ່ສຸດ ຕໍ່ຂົງເຂດວັດທະນະທຳຂອງຊາດລາວເຮົາ, ສົ່ງເສີມໃຫ້ພາສາລາວເຮົາມີຊີວິດຊີວາອັນແວວວາວ ແລະ ເປັ່ງປັ່ງສົດໃສຕື່ມອີກ ແລະ ຍັງຊ່ວຍໃຫ້ພວກເຮົາສາມາດນຳໃຊ້ເປັນເອກະສານອ້າງອີງທາງວິຊາການ ກໍຄືການສື່ສານໄດ້ອີກດ້ວຍ.

ຂໍເຊີນຊວນບັນດານັກປາດ, ຄູບາອາຈານ, ນັກຮຽນນັກສຶກສາ,ປັນຍາຊົນ ແລະ ພໍ່ແມ່ປະຊາຊົນລາວທຸກຖ້ວນໜ້າ ຈົ່ງຊ່ວຍກັນປົກປັກຮັກສາ, ສຶກສາຮ່ຳຮຽນຄົ້ນຄວ້າ ແລະ ສືບທອດເອົາມູນມໍລະດົກອັນມີຄຸນຄ່າທາງດ້ານວັດທະນະທຳຂອງຊາດນີ້ ສືບຕໍ່ໄປຊົ່ວກາລະນານ.



**ດ້ວຍຄວາມຍິນດີ ແລະ ປາຖະໜາດີ**

S. [signature]

**ສະຫວັນຄອນ ຣາຊມຸນຕຣີ**

# ຄຳເຫັນ

## ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

ກ່ອນອື່ນ, ຕ້ອງຂໍສະແດງຄວາມຍ້ອງຍໍຊົມເຊີຍຢ່າງສຸດອົກສຸດໃຈຕໍ່ທ່ານ **ສົມຈິດ ພັນລັກ** ທີ່ໄດ້ມີຄວາມມານະອົດທົນໃນການສຶກສາຄົ້ນຄວ້າ ຮົບໂຮມ ແລະ ຮຽບຮຽງໄວຍາກອນລາວສະໄໝກ່ອນ ມາປະສົມປະສານກັບໄວຍາກອນລາວປັດຈຸບັນໄດ້ຢ່າງສະໜິມກົມກຽວ ເພື່ອໃຫ້ຄົນລາວ,ຊາດລາວ ໄດ້ຫວນຄືນເຖິງອະດີດອັນສະຫຼາດສ່ອງໃສ ຂອງນັກປາດບັນພະບູລຸດລາວທີ່ມີວິທະຍາສາດກ້າວໜ້າສ້າງຜົນງານອັນວິຈິດພິດສະດານໄວ້ໃຫ້ພວກເຮົາຢ່າງໜ້າງຶດງໍ້ອັດສະຈັນ.

ທາງສຳນັກພິມຂອງພວກເຮົາໄດ້ອ່ານເບິ່ງແລ້ວເຫັນວ່າປຶ້ມພາສາລາວເຫຼັ້ມນີ້, ເຖິງວ່າພວກເຮົາບໍ່ໄດ້ນຳໃຊ້ເປັນທາງການແຕ່ກໍ່ສາມາດໃຊ້ເປັນຕຳລາທາງວິຊາການດ້ານພາສາສາດຂອງຊາດໄດ້. ສະນັ້ນ,ຈຶ່ງຂໍສະເໜີ ເຖິງບັນດາທ່ານນັກປາດອາຈານ ແລະນັກວິຊາການທັງຫຼາຍ ຈົ່ງພິຈາລະນາສຶກສາຄົ້ນຄວ້ານຳກັນອີກຕື່ມ.

ຂ້າພະເຈົ້າ,ໃນນາມຜູ້ອຳນວຍການສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ຈຶ່ງຂໍສະແດງຄວາມຍິນດີ ແລະ ຊົມເຊີຍຢ່າງ ຍິ່ງຕໍ່ທ່ານ **ສົມຈິດ ພັນລັກ** ທີ່ໄດ້ຜະລິດຜົນງານອັນເປັນຄຸນປະໂຫຍດໃຫ້ແກ່ສັງຄົມ ແລະ ປະເທດຊາດ. ຈຶ່ງຂໍອວຍພອນ ໄຊໃຫ້ທ່ານຈົ່ງມີສຸຂພາບເຂັ້ມແຂງ ສືບຕໍ່ສ້າງຜົນງານໃຫ້ກັບ ປະເທດຊາດຕໍ່ໄປ.

ທີ່.ນະຄອນຫຼວງວຽງຈັນ,ວັນທີ ໔໖/໐໖/໒໐໑໘

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

ວິວັນ ຈັນທະໂຄດ

# ຄຳເຫັນຂອງ

## ດຣ. ທອງຄຳ ອ່ອນມະນີສອນ

ຂ້າພະເຈົ້າ ຮູ້ສຶກດີອົກດີໃຈຫຼາຍ ແລະ ຂໍຊົມເຊີຍສັນລະເສີນຈາກໃຈຈິງມານະໂອກາດນີ້ຕໍ່ **ທ່ານ ສົມຈິດ ພັນລັກ** ທີ່ໄດ້ອຸທິດທັງແຮງກາຍ ແລະ ສະຕິປັນຍາຂອງຕົນອົດທົນພາກພຽນຄົ້ນຄວ້າຮິບໂຮມ ແລະ ຮຽບຮຽງປຶ້ມພາສາລາວ ຫຼື ຫຼັກໄວຍາກອນລາວຂຶ້ນມາ ຈົນໄດ້ຮັບຜົນສຳເລັດ ແລະ ພິມອອກສະເໜີຕໍ່ສັງຄົມ ຄືດັ່ງເຫັນປະຈັກຕານຳກັນນີ້.

ຜົນງານນີ້ ສະທ້ອນໃຫ້ເຫັນນ້ຳໃຈຮັກຊາດ, ຮັກພາສາ ແລະ ວັດທະນະທຳລາວຢ່າງເລິກເຊິ່ງ, ສະແດງໃຫ້ເຫັນນ້ຳໃຈກະຕັນຍູຮູ້ບຸນຄຸນຢ່າງສູງສົ່ງຕໍ່ບັນພະບຸລຸດ ແລະ ບັນດານັກປາດອາຈານລາວຜູ້ທີ່ມີສະຕິປັນຍາປີຊາສາມາດໃນການຄົ້ນຄິດປະດິດສ້າງຕົວໜັງສືລາວ ກໍຄືຫຼັກການຂຽນພາສາລາວ ໃນສະໄໝທີ່ຜ່ານມາ, ຊີ້ໃຫ້ເຫັນແຮງບັນດານໃຈທີ່ມີພະລັງຢ່າງບໍ່ທໍ້ຖອຍ, ບໍ່ຍອມຈຳນົນຕໍ່ຄວາມຍາກລຳບາກ ແລະ ອຸປະສັກໃດໆ ພ້ອມທັງມີວິໄສທັດເບິ່ງການໄກ ໃນການທີ່ຈະກະຕຸກຊຸກຍູ້ໃຫ້ເກີດຄວາມເປັນເອກະພາບກັນທັງໃນການເວົ້າ ແລະ ການຂຽນພາສາລາວອີກດ້ວຍ.

ປຶ້ມພາສາລາວ ຫຼື ໄວຍາກອນລາວຫົວນີ້ຖືກຮິບໂຮມ ແລະ ຮຽບຮຽງຂຶ້ນຈາກ ໔ ຫຼັກໄວຍາກອນລາວທີ່ເປັນທາງການ ແລະ ຊົງກຽດອັນສູງສົ່ງຄື: ຈາກສະບັບທຳອິດທີ່ເກົ່າແກ່ທີ່ສຸດຄື ສະບັບພຸດທະບັນດິດສະພາຈັນທະບູລີລາວ ອັນມີເຈົ້າເພັດຊະລາດເປັນປະທານ ແລະ ທ່ານອາຈານມະຫາສີລາ ວິຣະວົງສ໌ ເປັນເລຂາທິການ ແລະ ສະບັບທີ່ໃໝ່ອ່ຽມທີ່ສຸດຄືສະບັບທີ່ຂຽນຂຶ້ນໂດຍ ທ່ານພູມີ ວົງວິຈິດ ແລ້ວນຳເຂົ້າປະສົມປະສານກັນຢ່າງກົມກືນໂດຍອີງໃສ່ຫຼັກການຂຽນ ຕາມແບບສະບັບຂອງຫຼັກໄວຍາກອນສະບັບພຸດທະບັນດິດສະພາຈັນທະບູລີລາວ ເປັນແກນຫຼັກຢ່າງເຕັມຮູບແບບ, ຫາກປຽບທຽບແລ້ວກໍຄືດັ່ງ ການອະນຸລັກ ປົກປັກຮັກສາ ທະນຸຖະໜອມຮາກເຫງົ້າ ລຳຕົ້ນຂອງກົກໄມ້ແຫ່ງພາສາຊາດ ແລະ ການພັດທະນາສືບຕໍ່ເສີມຂະຫຍາຍ ແຕ່ງແປງກິ່ງງ່າສາຂາ ພ້ອມທັງຕື່ມເຕັມຕໍ່ຍອດໃຫ້ຈະເລີນງອກງາມຂຽວຂະຈີ ມີດອກໝາກອຸດົມສົມບູນໄວ້ປະດັບຊາດປະດັບແຜ່ນດິນ ແລະ ປະຊາຊົນລາວຕໍ່ໄປ.

ຜົນສໍາເລັດໃນເບື້ອງຕົ້ນຂອງການຄົ້ນຄວ້າຮຽບໂຮມ ແລະ ຮຽບຮຽງປຶ້ມດັ່ງກ່າວມານີ້ນັບວ່າ ມີຄວາມສໍາຄັນ ແລະ ສາລະປະໂຫຍດຫຼາຍປະການເປັນຕົ້ນວ່າ:

ເປັນການຄືນຊີບຟື້ນຊີວິດ ໃຫ້ແກ່ມໍລະດົກທາງປັນຍາອັນປະເສີດຂອງບັນພະບູລຸດ, ນັກປາດອາຈານລາວ ແລະ ວັດທະນະທໍາທາງດ້ານພາສາຂອງຊາດ ທີ່ພວມຈະຖືກຫຼົງລືມ ແລະ ຈົມຈາງຫ່າງຫາຍໄປຈາກຄວາມຊົງຈໍາຂອງສັງຄົມລາວ.

ເປັນການກອບກູ້ເອົາຂໍ້ມູນທາງວິຊາການອັນສໍາຄັນສຸດຍອດ ຂອງມໍລະດົກໄວຍາກອນລາວ-ຫຼັກພາສາລາວສະບັບທໍາອິດຂອງຊາດ ທີ່ຖືກຕິຖອຍໃຫ້ກາຍເປັນອະດີດໄປ ໃຫ້ກ້າວກັບຄືນມາເປັນສົມບັດອັນລໍ້າຄ່າ ແລະ ເປັນຂອງຂວັນອັນປະເສີດທີ່ຫາໄດ້ຍາກ ແກ່ອະນຸຊົນຄົນຮຸ່ນສືບທອດຕໍ່ໄປ ໃຫ້ໄດ້ສໍາຜັດກັບຂອງຈິງ, ຕົວຈິງ ແລະ ຫຼັກຖານຈິງອີກເທື່ອໃໝ່ ດ້ວຍສາຍຕາວິທະຍາສາດ, ວິຈາລະນະຍານ, ເຫດຜົນ ແລະ ວິໄສທັດຂອງຄົນຜູ້ຕ້ອງການຄວາມຖືກຕ້ອງຊັດເຈນ ແຫ່ງຍຸກໂລກາພິວັດ.

ເຖິງແມ່ນວ່າ: ປຶ້ມພາສາລາວ ຫຼື ຫຼັກໄວຍາກອນລາວສະບັບນີ້ ໄດ້ກໍາເນີດມາຈາກສາຍເລືອດ ແລະ ໝາກຫົວໃຈທາງປັນຍາຂອງນັກປາດອາຈານລາວຜູ້ປີຊາສາມາດຮຸ່ນກ່ອນໆກໍ່ຕາມ, ແຕ່ກໍ່ຍັງເປັນອັນໃໝ່ສໍາຫຼັບຄົນລາວຍຸກປັດຈຸບັນແຫ່ງສັດຕະວັດທີ ໒໑ ຢູ່ຢ່າງກັງຂາຄາໃຈ. ດັ່ງນັ້ນ, ການທີ່ຈະຖືກຮັບຮອງເອົາເປັນຫຼັກການພາສາລາວ ຫຼື ໄວຍາກອນລາວຢ່າງເປັນທາງການໂດຍງ່າຍດາຍນັ້ນ ກໍ່ຄົງເປັນການຍາກບໍ່ແມ່ນໜ້ອຍ ຄົງຈະຕ້ອງໄດ້ໃຊ້ເວລາ ເພື່ອທົດສອບຜ່ານຜ່າອຸປະສັກຂໍ້ຫຍຸ້ງຍາກ ຈາກທັດສະນະຂັດແຍ້ງຕ່າງໆນາໆ ແລະ ເພື່ອພິສູດຄວາມຈິງທາງວິຊາການ ອັນມີລັກສະນະວິທະຍາສາດຂອງອັກສອນລາວ ຈາກແນວຄິດຫວັງດີ, ປອງດອງ ແລະ ສ້າງສັນຂອງນັກປາດອາຈານ ແລະ ຜູ້ຮອບຮູ້ໃນຂົງເຂດວິຊາສະເພາະນີ້ຕໍ່ໄປອີກນານພໍສົມຄວນ. ເຖິງຢ່າງໃດກໍ່ຕາມ ຂໍໃຫ້ຄິດສ້າງສັນນໍາກັນວ່າ:

ປຶ້ມພາສາລາວ ຫຼື ໄວຍາກອນລາວທີ່ທ່ານ **ສົມຈິດ ພັນລັກ** ຮຽບໂຮມຮຽບຮຽງຂຶ້ນມານີ້ສາມາດໃຊ້ເປັນຕໍາລາທາງວິຊາການຂັ້ນພື້ນຖານໃນການ

ສຶກສາຄົ້ນຄວ້າກ່ຽວກັບອັກສອນລາວ, ພາສາລາວທັງເປັນປັດໄຈຫຼັກທີ່ຈະນຳໃຊ້ເປັນເຄື່ອງມື ໃນການປັບປຸງປ່ຽນແປງ ແກ້ໄຂຂໍ້ຂາດຕົກບົກຜ່ອງຕ່າງໆ ທັງໃນຕົວຂອງໄວຍາກອນສະບັບນີ້ເອງ ແລະ ໄວຍາກອນລາວສະບັບອື່ນໆ ທີ່ຖືກນຳໃຊ້ຢ່າງເປັນທາງການທັງໃນອະດີດ ແລະ ປັດຈຸບັນ ເພື່ອຄວາມເປັນເອກະພາບໃນການເວົ້າ ແລະ ຂຽນພາສາລາວສືບຕໍ່ໄປໄດ້ຢ່າງສົມເຫດສົມຜົນແທ້.

ຫາກລັດຖະບານ,ມະຫາຊົນ ແລະ ສັງຄົມເຫັນວ່າ: ຈະໄດ້ມີການດຳເນີນບາດກ້າວປັບປຸງ,ດັດແປງແກ້ໄຂຫຼັກພາສາລາວ ຫຼື ຫຼັກໄວຍາກອນລາວໃນອະນາຄົດແລ້ວ ຂ້າພະເຈົ້າເຫັນວ່າ: ປື້ມພາສາລາວສະບັບນີ້ ຄົງຈະເປັນຜົນງານທາງວິຊາການ ທີ່ໄວ້ເນື້ອເຊື່ອໃຈໄດ້ສະບັບໜຶ່ງ ໃນການທີ່ຈະນຳໄປພິຈາລະນາ ເພື່ອຮັບຮອງເອົາຢ່າງເປັນທາງການກໍໄດ້.

ສຸດທ້າຍນີ້, ຂ້າພະເຈົ້າຂໍອວຍພອນໄຊ ແລະ ຂໍສົ່ງນໍ້າໃຈ ແຫ່ງຄວາມປາຖະໜາດີ ແລະ ຫວັງດີໃຫ້ແກ່ **ທ່ານ ສົມຈິດ ພັນລັກ** ເຈົ້າຂອງຜົນງານປື້ມພາສາລາວລ້ານຊ້າງນີ້ ຈົ່ງມີສຸຂະພາບເຂັ້ມແຂງ, ມີພະລັງສະຕິປັນຍາທີ່ໃສແຈ້ງ ສືບຕໍ່ສ້າງຜົນງານທີ່ດີມີຄຸນຄ່າໃຫ້ຫຼາຍຂຶ້ນກວ່າເກົ່າ ແລະ ຂໍຈົ່ງໂຊກດີມີໄຊ, ຮຸ່ງເຮືອງສົດໃສໃນຊີວິດ ແລະ ໃນໜ້າທີ່ການງານຕະຫຼອດໄປ.

ດ້ວຍຄວາມນັບຖື ແລະ ຮັກແພງ.

ບ້ານດົງປ່າແຫຼບ,ວັນທີ ໒໕ ພຶດສະພາ ໒໐໑໒



ດຣ. ທອງຄາ ອອນມະນີສອນ

ສິລະປິນແຫ່ງຊາດ

ນັກກະວີຊີໄຣ

# ຄຳນຳ

## ຂອງຜູ້ຮຽບໂຮມ ແລະ ຮຽບຮຽງ

**ໄວຍາກອນລາວ** ທີ່ທ່ານກຳລັງອ່ານຢູ່ນີ້, ເປັນເອກສານອ້າງອີງສະບັບໜຶ່ງທີ່ມີຄວາມຄົບຖ້ວນ ແລະ ອຸດົມສົມບູນທີ່ສຸດໃນບັນດາໄວຍາກອນລາວ ໃນແຕ່ລະຍຸກສະໄໝ ທີ່ຜູ້ຮຽບໂຮມໄດ້ຄົ້ນຄວ້າ ແລະ ຂຽນຂຶ້ນມາດ້ວຍຄວາມສົງວນມັກ ແລະ ຄວາມສັທທາອັນແຮງກ້າ **ຕໍ່ວັດທະນະທັມອັນຍອດຍິ່ງຂອງຊາດລາວເຮົາ.** ຜູ້ຂຽນຈຶ່ງມີຄວາມພາກພູມໃຈ ແລະ ໂຊກດີເປັນຢ່າງຍິ່ງ ທີ່ໄດ້ພົບເຫັນມໍຣະດົກອັນອັກມະຫາຄຸນຂອງຊາດລາວເຫຼົ່ານີ້.

ຂ້າພະເຈົ້າໄດ້ບວດຊຮຽນເມື່ອປີ **ພ.ສ ໒໕໒໑,ຄ.ສ ໑໙໗໘** ຕອນອາຍຸ **໑໕** ປີ, ຍ້ອນຄວາມສັທທາ ຕໍ່ພຣະສົງພ໌ສາມເນຣທີ່ມີຣະບຽບວິນັຍຕໍ່ສັງຄົມ ກໍຄືພຣະພຸທສາສນາ, ຄວາມຈິງແລ້ວຜູ້ຂ້າໄດ້ຂໍອະນຸຍາດບວດຈາກພໍ່-ແມ່ແຕ່ຕອນອາຍຸ **໑໐** ປີ, ແຕ່ອາຍຸກສຽຣບໍ່ເຖິງ.

ເມື່ອບວດໄປແລ້ວ ຂ້າພະເຈົ້າຖືວ່າໂຊກດີທີ່ສຸດ ທີ່ໄດ້ມີໂອກາສຮຽນພາສາປາລີ ເຊິ່ງແມ່ນທ່ານອາຈາຣຍ໌ **ຄຳພັນ໌ ດວງແກ້ວ** ເປັນອາຈາຣຍ໌ສອນຢູ່ໂຮງຮຽນມັທຍົມສຶກສາສົງພ໌, ວັດສຣີສວ່າງວົງສ໌,ເມືອງ ແລະ ແຂວງໄຊຍະບູຣີ,ຈຶ່ງຂໍຂາບຂອບພຣະຄຸນຢ່າງສູງຍິ່ງແດ່ **ທ່ານ ອາຈາຣຍ໌ມາຕະໂອກາສນີ້ດ້ວຍ.**

ອາຈາຣຍ໌ເຄີຍບອກສອນວ່າ: ພາສາລາວເຮົາແຕ່ກ່ອນອຸດົມສົມບູຣນ໌ແທ້ ແຕ່ຍ້ອນລາວເຮົາຕົກເປັນຫົວເມືອງຂຶ້ນ ຂອງຝຣັ່ງສ໌ຝຣັ່ງສ໌ໄດ້ໃຊ້ທຸກຄວາມພຍາຍາມ ເພື່ອໃຫ້ຄົນລາວເຮົາທຳລາຍພາສາຂອງຕົນເອງ ແລ້ວໃຊ້ພາສາຂອງເຂົາແທນ ຄືດັ່ງວຽດນາມ, ແຕ່ນັກປຣາຊຍາຈາຣຍ໌ ພ້ອມດ້ວຍພຣະສົງພ໌ອົງຄ໌ເຈົ້າຂອງພວກ

ເຮົາໄດ້ຕໍ່ສູ້ຢ່າງແຂງແຮງກັບພວກເພິ່ນ, ໃນທີ່ສຸດຈຶ່ງຕົກລົງກັນໃຫ້ມີໂຕອັກສອນ ໒໗ ໂຕ ແລະ ຕົກມາປີ **ຄ.ສ ໑໙໓໘** ເພິ່ນກໍ່ຕັດໂຕ **ຣ** ອອກອີກ ພ້ອມກັບໂຕ ຦ ປກົມ,ຍ້ອນເພິ່ນເຫັນວ່າ: ສະພາບການບ້ານເມືອງມີຄວາມສັບສົນຫວຸ້ນວາຍ,ຍ້ອນການແຊກແຊງອຳນາຈາກຕ່າງດ້າວ,ຄົນລາວເຮົາຈຳນວນຫຼວງຫຼາຍຍັງກືກໜັງສື ແລະ ເພື່ອໃຫ້ມັນງ່າຍແກ່ຜູ້ ສຶກສາຮ່ຳຮຽນ ເພິ່ນຈຶ່ງຂຽນຕາມພາສາເວົ້າ,ເມື່ອໃດປະເທດຊາດຂອງພວກເຮົາມີຄວາມອຸດົມສົມບູນ ແລ້ວເພິ່ນຄົງແກ້ໄຂ ແລະ ປັບປຸງຂຶ້ນອີກຕື່ມ,ແຕ່ທີ່ສຳຄັນຢ່າລືມວ່າພາສາປາລີໄດ້ມີບົດບາດ ແລະ ອິດທິພົນທີ່ສຸດຕໍ່ພາສາລາວເຮົາຕັ້ງແຕ່ສະໄໝເຈົ້າຟ້າງຸ່ມເປັນຕົ້ນມາ.

ຕໍ່ຄຳແນະນຳສັ່ງສອນຂອງທ່ານອາຈານດັ່ງກ່າວ ເຮັດໃຫ້ຜູ້ຮັບໂຮມມີຄວາມສົນໃຈຢ່າງພິເສດ ໃນການຮຽນພາສາປາລີຈາກທ່ານ, ເຖິງວ່າຕົນເອງມີຄວາມຮູ້ບໍ່ສູງ ແຕ່ກໍ່ມີຄວາມມຸ່ງຫວັງ ຫຼືອຸດົມຄະຕິທີ່ໃຝ່ຝັນຢາກປັບປຸງພາສາລາວເຮົາໃຫ້ອຸດົມສົມບູນຕັ້ງແຕ່ສະໄໝຮຽນຢູ່ຊັ້ນມັດທະຍົມ **໑** ເປັນຕົ້ນມາ.

ຕົກມາປີ **ຄ.ສ ໒໐໑໐** ຂ້າພະເຈົ້າໄດ້ຂຽນລົງໜັງສືພິມພ້ອງຈັນທນ໌ໃໝ່ ເພື່ອແລກປ່ຽນຄວາມຮູ້ດ້ານພາສາລາວນຳທ່ານ **ບຸນ ສຣີ ດວງເຂັມທອງ (ດວງມະນີໂຄດ)** ຈາກນັ້ນມາກໍ່ໄດ້ຕັດສິນໃຈລົງມືຂຽນໄວຍາກອນລາວສະບັບນີ້ຂຶ້ນມາ ເພື່ອໃຫ້ບັນດາທ່ານຜູ້ຮູ້ ແລະ ອນຸຊົນລາວຜູ້ທີ່ສົນໃຈ ໄດ້ສຶກສາຄົ້ນຄວ້ານຳກັນ.

ໃນເບື້ອງຕົ້ນໄດ້ຂຽນສະບັບຫຼັງປີ **ຄ.ສ ໑໙໔໘** ຄື: ສະບັບທີ່ມີອັກສອນ ໒໗ ໂຕ,ແຕ່ບັນດານັກປຣາຊຍາຈານຫຼາຍທ່ານໃຫ້ທັດສະນະວ່າ: ນ້ອງເຮັດໄດ້ແນວນີ້ແມ່ນດີທີ່ສຸດ ແຕ່ຖ້າຈະໃຫ້ມັນດີແທ້ຢາກສເນີໃຫ້ນ້ອງໄປຄົ້ນຄວ້າໄວຍາກອນລາວ ສະບັບພຸທສ

ບັຕຫີຕສກາຈັນທບ໌ບູຣີ **ໂດຍແມ່ນເຈົ້າເພັຊຣາຊ ຣັຕນວົງສາ ເປັນປຣານ** ແລະ **ທ່ານ ອາຈາຣຍ໌ ມຫາສີລາ ວີຣວົງສ໌** ເປັນເລຂາທິການ ແລະ ວິຊາການ,ພິມພ໌ປີພຸທສັກຣາຊ **໒໔໙໗**, ຄຣິຕສັກຣາຊ **໑໙໕໔** ພິມພ໌ທີ່ໂຮງພິມພ໌ເອກສ໌ແຕຣມໂອຣຽງ ປະເທສວຽດນາມ.

ໂຕອັກບອຣທີ່ນຳໃຊ້ເຂົ້າໃນການຂຽນນີ້ ແມ່ນອີງໃສ່ສບັບຕົ້ນ ທັງໝົດ ແຕ່ຜູ້ຮຽບໂຮມຂໍສເນີໃຫ້ແປງພຍັນຊນະປະສົມ ເປັນໂຕ ດຽວຄືກັບໂຕ **(ໜ ແລະ ໝ)** ເພື່ອບໍ່ໃຫ້ມັນສັບສົນກັບພຍັນ ຊນະ ຄວບ ຈະເວົ້າໃນການອັກຂຣວິທີ ໝວດພຍັນຊນະປະສົມ.

ເນື້ອໃນໄວຍາກຣຕ໌ ການອັກຂຣວິທີແມ່ນເອົາຈາກສບັບຕົ້ນ ຈຳນວນນຶ່ງ, ແຕ່ໃນສບັບນີ້ຜູ້ຂຽນໄດ້ຕັດໂຕສກົດອອກອີກເຊັ່ນວ່າ: **(ວັຒຒຍຸຕຕ໌)**ມາເປັນ**(ວັຒຍຸຕ)ຯລຯ** ເພື່ອໃຫ້ມີຄວາມສດວກຂຶ້ນ. ນອກນັ້ນແມ່ນເອົາມາຈາກໄວຍາກຣຕ໌ລາວຂອງ **ທ່ານກູມີ ວົງສ໌ ວິຈິຕຣ໌** ແລະ Advanced English Grammar For Highlearner ເປັນສ່ວນໃຫຍ່ ເພາະເຫັນວ່າ: ໄວຍາກອນລາວຂອງທ່ານກູມີ ວົງສ໌ວິຈິຕຣ໌ ກໍມີຄວາມກ້າວໜ້າທັນສມັຍຢູ່ແລ້ວ ທັງເນື້ອໃນ ແລະ ກາພຍ໌ກລອນຕ່າງໆຂອງເພິ່ນນັ້ນ ກໍລ້ວນແລ້ວແຕ່ມີຄຸຕຄ່າຕໍ່ຊາຕ ແລະ ວັຒນສັມຢ່າງສູງສີ່ງທີ່ສຸດ ເຊິ່ງຄົນລາວເຮົາທຸກໆຄົນຄວຣ ຈາຣຶກໄວ້ ຊົ່ວກາລະນານ, ສຳຫຼັບພາສາອັງກລິສນັ້ນ ຍ້ອນເຫັນວ່າ ເຂົາເປັນສາ ກົລແລ້ວ ແລະ ດຽວນີ້ຄົນລາວເຮົາ ກຳລັງນິຍົມຮຽນ ຢ່າງກວ້າງຂວາງ ແລະ ໃຊ້ກົຍເກຕຫ໌ດຽວກັບໄວຍາກຣຕ໌ລາວ ຂອງທ່ານກູມີວົງສ໌ວິ ຈິຕຣ໌ ຈຶ່ງໄດ້ນຳມາຕໍ່ເຕີມເສີມແຕ່ງຂອງ ເຮົາຂຶ້ນອີກ ເພື່ອໃຫ້ມັນ ງ່າຍແກ່ຜູ້ທີ່ສົນໃຈຮຽນພາສາອັງກລິສ.

ສຳຫຼັບວັຈນານຸກົມອ້າງອີງ ແມ່ນພົຈນານຸກົມສບັບສເລີມ

ພຣະກຸງຕປີ **ພ.ສ ໒໕໓໐** ຂອງໄທຍ໌ ເພາະວ່າ: **ການາລາວ-ໄທຍ໌** ແມ່ນມີກົກເຄົ້າເຫງົ້າມູລມາຈາກອັນດຽວກັນ ຄືກັບໄມ້ຕົ້ນດຽວກັນ ແຕ່ແບ່ງເປັນຄົນລະງ່າເທົ່ານັ້ນ, ຕ່າງແຕ່ຂອງເພິ່ນເປັນໂຕຫຼ່ຽມຂອງເຮົາເປັນໂຕມົນຈິງກົມ ມັນຈຶ່ງບໍ່ມີຫຍັງຍາກໃນການຮຽນ ແລະການຂຽນການາສາລາວເຮົາໃຫ້ງ່າຍ ແລະ ຖືກຕ້ອງ.

ການຄົ້ນຄວ້າສບັບນີ້ ແມ່ນໄດ້ຮັບແຮງບັນດາລໃຈ ຈາກຄຕກັມມາທິການສູນຍ໌ກາງສຶກສາສົງຄ໌ ແລະ ຄຕະ ອ.ພ.ສ ສູນຍ໌ກາງເປັນຢ່າງຍິ່ງຄື: ເພິ່ນໄດ້ໃຫ້ຟອນທ໌ການາລາວສບັບນີ້ ແລະ ຄໍາສັ່ງແນະນໍາຂອງທ່ານນາຍົກຣັຖມົນຕຣີ ວ່າດ້ວຍການຈັດຕັ້ງຄົ້ນຄວ້າຫຼັກການາສາສາສຕຣ໌ລາວສບັບເລຂທີ **໑໐/ນຍ** ລົງວັນທີ **໐໔/໐໗/໑໙໙໔,** ໃນນັ້ນກໍ່ມີທ່ານສຣີວຽງແຂກ ກຣຕິວົງສ໌ ຫົວໜ້າກົມພິມພ໌ຈໍາໜ່າຍ ຂອງກຊວງຖແລງຂ່າວ ວັຒນສັມ ແລະທ່ອງທ່ຽວ, ທ່ານ ດຣ.ທອງຄໍາ ອ່ອນມຕີສຣ, ທ່ານ ດຣ.ສຸເນຕໂພລິສາຣ, ທ່ານອາຈາຣຍ໌ທອງຄໍາ ຫຼ່ຽມບຸຄເຮືອງ, ທ່ານຊຽງຄໍາພັນສ໌ ລັມມະວົງສ໌, ທ່ານພໍ່ລູງ ມຫາບຸຄເພັງ ສຣີອຸດົມພັນສ໌ກັມການສູນຍ໌ກາງແນວລາວສ້າງຊາຕ, ທ່ານ ສຸການຣ ຣັຕນຣາສີຄຕກເສຕຣສາສຕຣ໌ນາບົງ ມຫາວິທຍາລັຍແຫ່ງຊາຕ, ທ່ານວຽງແກ້ວ ຟອງສນິທ ປະເທສສວິຊເຊີແລນດ໌ ແລະ ນັກປຣາຊຄາຈາຣຍ໌ ທ່ານອື່ນໆອີກຢ່າງຫຼວງຫຼາຍ ໂດຍສເພາະທ່ານ ດຣ.ທອງຄໍາ ອ່ອນມຕີສຣ ນອກຈາກເພິ່ນໃຫ້ເອກສາຣຄົ້ນຄວ້າທີ່ສໍາຄັຄແລ້ວ ເພິ່ນຍັງໃຫ້ທິສທາງໃນການສຶກສາຄົ້ນຄວ້າ ທີ່ເປັນສາຣະປະໂຍຊນ໌ອີກຫຼາຍໆຢ່າງ ຈຶ່ງຂໍສແດງຄວາມຂອບພຣະຄຸຕເປັນຢ່າງສູງຍິ່ງ ມາຕະໂອກາສນີ້ດ້ວຍ.

ພາສາລາວເຮົາສະໄໝນັ້ນ ໄດ້ຖືກຕັດອອກໃນຣະບອບຝຣັ່ງສ໌ປົກຄອງ ໑໔ ໂຕ,ໂດຍເພິ່ນນອງວ່າ: ເພື່ອໃຫ້ມັນສອດຄ່ອງກັບພາສາຝຣັ່ງສ໌ທີ່ມີໂຕອັກສອນ ໒໖ ໂຕ.

ເຖິງຢ່າງໃດກໍຕາມ, ພາສາລາວລ້ານຊ້າງເຫຼັ້ມນີ້ ໄດ້ຈັດພິມພ໌ຈຳໜ່າຍ ເພື່ອໄວ້ໃຫ້ຄົ້ນຄວ້າປຽບທຽບລະຫວ່າງ ພາສາລາວເດີມກັບພາສາລາວໃນປັຈຈຸບັນ ແລະ ເພື່ອອນຸຮັກສ໌ມໍຣດົກວັຜນທັມຂອງຊາຕໄວ້ ໃຫ້ຍືນຍົງຄຽງຄູ່ກັບຊາຕລາວ,ຄົນລາວຊົ່ວກາລະນານ, ບໍ່ແມ່ນເພື່ອເປັນຕຳຣາຮຽນ ແລະ ຕຳຣາສອນ.

ການໃຊ້ຂີດຂຽນ, ສິດສອນ ຫຼື ສຶກສາຮ່ຳຮຽນແມ່ນໃຫ້ນຳໃຊ້ພາສາລາວສບັບປັຈຈຸບັນ, ການທີ່ຈະນຳໃຊ້ໄດ້ ຫຼື ບໍ່ນັ້ນຂໍໃຫ້ເປັນດຸລພິນິຈຂອງຣັຖບາລ ຫຼື ອນຸຊົນຮຸ່ນຕໍ່ໆໄປຈະເຫັນສົມຄວນ.

ຂ້າພເຈົ້າມີຄວາມໝັ້ນໃຈວ່າ: ໄວຍາກຣຕ໌ລາວທີ່ຜູ້ຂ້າໄດ້ຮົບໂຮມ ແລະ ຮຽບຮຽງຂຶ້ນມານີ້ ຍ່ອມບໍ່ຖືກກັບຈິຕໃຈຂອງບັຣດາທ່ານ ທີ່ມີທັສນະແຕກຕ່າງກັນເຊັ່ນວ່າ: ຜູ້ມັກຂຽນຕາມຫຼັກເຄົ້າມູລ ແລະ ຜູ້ມັກຂຽນຕາມສຽງ, ແຕ່ຕາມຄວາມເປັນຈິງແລ້ວໃນຊາຕນຶ່ງໆຍ່ອມປະກອບດ້ວຍຫຼາຍທ້ອງຖິ່ນ ແລະ ເຜົ່າຊົນທີ່ມີ ສຽງແລະ ສຳນຽງແຕກຕ່າງກັນຢ່າງທາວະວິສັຍ. ເພາະສນັ້ນ,ຫາກເຮົາຈະຂຽນຕາມສຽງ ຄວາມເປັນເອກກາພກັນໃນສັງຄົມ ຫຼື ປະເທສຊາຕກໍຍ່ອມບໍ່ເກີດຂຶ້ນໄດ້, ແຖມຍັງຈະມີການທົກຖຽງກັນຢ່າງບໍ່ມີວັນຈົບສິ້ນດັ່ງທຸກວັນນີ້.ດ້ວຍເຫດນັ້ນ,ເຮົາຈະເຮັດແນວໃດເພື່ອໃຫ້ຄົນໃນຊາຕ ມີຄວາມເປັນເອກກາພ ຢ່າງໝັ້ນຄົງຖາວອນຊົ່ວກາລະນານ,ທັງເປັນການສືບທອດມູລມໍຣດົກທີ່ດີເອົາໄວ້?

ຢ່າງໃດກໍຕາມ,ຜູ້ຮົບໂຮມຂໍຝາກຜົລງານຊິ້ນນ້ອຍໆນີ້ໄວ້ກັບບັຣດາທ່ານນັກຄົ້ນຄວ້າທັງຫຼາຍ, ຈົ່ງພ້ອມກັນພິຈາຣຕາດ້ວຍເຫດ

ຜົລແລ້ວຄິດຫາທາງແກ້ໄຂປັບປຸງຊ່ວຍກັນ ເພື່ອໃຫ້ອນຸຊົນລາວໄດ້ມີຄວາມເອກອ້າງທະນົງໃຈໃນຄວາມເປັນຊາຕ,ຠູມໃຈ ແລະ ຠັກດີຕໍ່ບັຣພບຸຣຸສຂອງຕົນທີ່ໄດ້ສ້າງວິຣກັມອັນວິຈິຕຣພິສດາຣໄວ້ໃຫ້ເຂົາ.

ຂໍອຸທິສຜົລງານທີ່ເປັນບຸຓກຸສົລທັງໝົດນີ້ແດ່ **ພໍ່-ແມ່,ຄຣູບາອາຈາຣຍ໌ ຕລອດທ່ານຜູ້ມີພຣະຄຸຓທັງຫຼາຍ** ໂດຍສເພາະທ່ານທີ່ **ປດິຩຐ໌ໄຕອັກຩຣລາວຂຶ້ນມານີ້** ຈົ່ງໄປສູ່ສຸຄຕິຠົພສວັຣຄ໌ເທີດ! **ພິເຩສ** ຂໍຂອບໃຈຢ່າງຍິ່ງແດ່ **ທ່ານທີ່ປດິຩຐ໌ຟອນທ໌** (Laovannsak) ຠາສາລາວແຜ່ນນີ້ອອກມາ ຂໍໃຫ້ພົບແຕ່ຄວາມສຸຂຄວາມຈເຣີນ,ຈົ່ງປະສົບຜົລສຳເຣັຈທຸກໆຢ່າງ,ປະກອບໄປດ້ວຍອາຍຸ,ວັຓຓະ, ສຸຂະ ແລະ ພລະ ຕລອດກາລນານດ້ວຍເທີດ!

**ເສື້ອຜ້າ** ເປັນອາຠຣຓ໌ ປດັບຮ່າງກາຍໃຫ້ສວຍງາມສັນໃດ, **ຠາສາ** ກໍເປັນອາຠຣຓ໌ ປດັບວາຈາ ແລະ ສຕິປັຌຌາໃຫ້ສວຍງາມສັນນັ້ນ.

**ທີ່.ນວ,ວັນທີ ໑໕/໐໕/໒໕໕໕/໒໐໑໒**

**ຜູ້ຮິບໂຮມ ແລະ ຮຽບຮຽງ:**

**ສົມຈິຕ ພັນສ໌ລັກຩຓ໌**



**ໂທຣສັພທ໌: ໐໒໐ ໕໖໕໗໙໕໑໙, ໕໙໙໕໖໐໘໗**

(ທ່ານທີ່ສົນໃຈຢາກເປັນໂຕແທນຈຳໜ່າຍກຣຸຓາຕິດຕໍ່ເບີນີ້ເທົ່ານັ້ນ)

# ອາຣັມກບົທ:

**ພາສາ ແມ່ນວັດທະນະທັມອັນຍອດຍິ່ງຂອງມວນມະນຸດຊາດ.**

ຊາດໃດກໍ່ຕາມທີ່ມີພາສາ ແລະ ວັດທະນະທັມເປັນຂອງຕົນເອງແລ້ວ ຖືວ່າເປັນຊາດທີ່ສົມບູຣດ໌ແບບທີ່ສຸດ, ຖ້າວ່າພາສານັ້ນທີ່ມີຫຼັກໄວຍາກອນຄົບຊຸດສົມບູຣດ໌, ແຕ່ລະຄຳສັພທ໌ທີ່ຂຽນລົງໄປນັ້ນມີຄວາມໝາຍໃນໂຕ ແລະ ນອກໂຕກໍ່ຍິ່ງເຮັດໃຫ້ວັດທະນະທັມດ້ານພາສາມີຄວາມໂດດເດັ່ນຂຶ້ນ.

ສະນັ້ນ, ເພື່ອເຮັດໃຫ້ພາສາລາວເຮົາມີຄວາມອຸດົມສົມບູຣດ໌ທຽບເທົ່າກັບສາກົລ ແລະ ໂດດເດັ່ນຂຶ້ນນັ້ນມັນແມ່ນໜ້າທີ່ຂອງຄົນໃນຊາດທຸກໆຄົນ ທີ່ຈະຕ້ອງສຶກສາຄົ້ນຄວ້າ,ປັບປຸງ ແລະ ແກ້ໄຂໃຫ້ດີຍິ່ງໆຂຶ້ນເທື່ອລະກ້າວ.

ຊາດລາວເຮົາເປັນຊາດນຶ່ງ ທີ່ມີວັດທະນະທັມອັນເກົ່າແກ່,ບໍ່ນ້ອຍໜ້າໃຫ້ຊາດອື່ນໃດໃນພິພົພນີ້ ແລະ ພາສາລາວເຮົາກໍ່ໄດ້ຢືນຍົງຄົງໂຕມາຕລອດກາຍໃຕ້ມໍຣະດົກອັນແສນລະອຽດລະອ່ຽວ, ຄວາມຈິງແລ້ວພາສາລາວເຮົາ ໄດ້ເກີດຂຶ້ນພ້ອມກັບຄົນລາວມາຕັ້ງຫຼາຍພັນປີແລ້ວເຊິ່ງມີທັງພາສາເວົ້າ ແລະ ພາສາຂຽນທີ່ອຸດົມສົມບູຣດ໌ ໃນສມັຍນັ້ນ,ແຕ່ຍັງບໍ່ທັນມີຫຼັກໄວຍາກອນທີ່ຖືກຕ້ອງແນ່ນອນ, ຈົນມາເຖິງສມັຍ **ເຈົ້າພຍາຟ້າງຸ່ມມຫາຣາຊແຫ່ງຫຼ້າລ້ານຊ້າງ** ໄດ້ນຳເອົາພຣະພຸທສາສນາເຂົ້າມາລາວຢ່າງເປັນທາງການ ຈຶ່ງໄດ້ນຳເອົາຫຼັກໄວຍາກອນພາສາປາລີ - ສັນສກຣິດມາໃຊ້, ໃນຣະຍະດັ່ງກ່າວພາສາລາວເຮົາໄດ້ມີຫຼັກໄວຍາກອນທີ່ສົມບູຣດ໌, ແຕ່ກໍ່ຍາກໃນການສຶກສາຮ່ຳຮຽນເພາະວ່າ ມັນເປັນພາສາປາລີລ້ວນໆ ເກືອບເວົ້າໄດ້ວ່າ: ຜູ້ໃດຢາກຮູ້ກໍ່ຕ້ອງໄດ້ບວດຮຽນຂຽນອ່ານ ໝາຍຄວາມວ່າຜູ້ໃດບໍ່ໄດ້ບວດຢາກວ່າບໍ່ມີໂອກາສຮູ້ໜັງສືເລີຍ. ຂບວນວິວັດນ໌

ໄດ້ຜັນແປໄປແຕ່ລະຣະຍະ, ບັຣດານັກປຣາຊຍາຈາຣຍ໌ລາວເຮົາກໍ່ບໍ່ໄດ້ນ້ອຍໜ້າໄດ້ປັບປຸງ,ປະຍຸກຕ໌ ຫຼື ປຣິວັຕຣ໌ກາສາລາວເຮົາຕລອດມາ ເຮັດໃຫ້ກາສາລາວເຮົາມີຄວາມເປັນໄຕເອງຫຼາຍຂຶ້ນ.

ຕາມຄວາມຈິງທາງວິທຍາສາສຕຣ໌ແລ້ວ ທຸກໆຊາຕທຸກໆກາສາ ຍ່ອມມີສອງກາສາດ້ວຍກັນຄື: ກາສາເວົ້າ ແລະ ກາສາຂຽນ. ກາສາເວົ້າເປັນກາສາທີ່ເກີດຂຶ້ນກ່ອນຈຶ່ງບໍ່ມີຫຼັກໄວຍາກຣຕ໌ຄວບຄຸມ, ຈະເວົ້າຈະວ່າໄປແບບໃດກໍ່ໄດ້ຂໍໃຫ້ເຂົ້າໃຈເຊິ່ງກັນ ແລະ ກັນກໍ່ເປັນພໍ. ສ່ວນກາສາຂຽນເກີດຂຶ້ນກາຍຫຼັງ ຈຶ່ງຕ້ອງມີຫຼັກການ ຫຼື ຫຼັກໄວຍາກຣຕ໌ຄວບຄຸມຢ່າງຄັກແນ່, ເມື່ອຂຽນລົງໄປແລ້ວຕ້ອງໃຫ້ໄດ້ຄວາມໝາຍ, ທັງມີລັກษณະວິທຍສາສຕຣ໌, ບໍ່ວິບັຕ ຫຼື ເສຍຫາຍ ແລະ ບໍ່ໃຫ້ມີຄຳເວົ້າທີ່ວ່າ:

**(ກາສາຂຽນຂາດເຄົ້າ,ກາສາເວົ້າຂາດຫຼັກ)**ເກີດຂຶ້ນກາຍຫຼັງ

**ໄຕຢ່າງການຂຽນກາສາລາວໃຫ້ໄດ້ຄວາມໝາຍ:**

ວັຈຈ໌ ແປວ່າ: ອຸຈຈາຣະ,ອາຈົມ,ຂີ້.
ວັຈນ໌ ,, ວາຈາ,ຄວາມເວົ້າ,ໃຈຄວາມ,ຂໍ້ຄວາມທີ່ຈົດກ່າຍໄວ້.
ວັຈຊ໌ ,, ລູກງົວ.
ວັສ ,, ຝົນ,ຣດູຝົນ,ປີ.
ວັຊຊ໌ ,, ການເວົ້າ,ຖ້ອຍຄຳ,ໂທສ,ຄວາມຜິດ,ການເວົ້າຕິຕຽນ.
ວັຊ ,, ຄອກສັຕວ໌,ສິ່ງທີ່ຄວຣປະຖິ້ມ,ໂທສ,ຄວາມຜິດ.
ວັດ ,, ແຫກ,ກະຕວງ,ປະມາຕ,ສຳນັກສົງฆ໌,ວິຫາຣ.
ວັฏ ,, ວົງກົມ,ໝູນ,ຮອບແຫ່ງການວຽນວາຍຕາຍເກີດ.
ວັฏฏ໌ ,, ວົງກົມ,ການໝູນ,ຮອບແຫ່ງການວຽນວາຍຕາຍເກີດ.
ວັฒน໌ ,, ຄວາມຈເຣີญ,ຄວາມງອກງາມ.

**ໂຕຢ່າງການຂຽນ ແລະ ການອ່ານພາສາອັງກລິສ:**

Grand ອ່ານວ່າ ແກຣນດ໌ ແປວ່າ ໃຫຍ່ຫຼວງ,ໃຫຍ່ໂຕ,ມຫືມາ, ລວມຍອດ,ສຣູປ,ງົດງາມ.

Grant ,, ແກຣນທ໌ ,, ອນຸຍາຕໃຫ້,ຍອມໃຫ້,ຍອມຮັບ.

Heart ,, ຮາຣທ໌ ,, ຫົວໃຈ,ໃຈກາງ,ຄວາມຮັກ.

Hearth ,, ຮາຣຣ໌ ,, ເຕົາໄຟ,ເຕົາເພີງ,ກອງໄຟ.

Hard ,, ຮາຣດ໌ ,, ແໜ້ນ,ແຂງ,ໜັກ,ລຳບາກກາກັມ.

Hart ,, ຮາຣທ໌ ,, ກວາງໂຕຜູ້,ກວາງເຖິກ.

Lash ,, ແລຊ໌ ,, ໄມ້ແສ້ຕີ,ຂ້ຽນ,ຟາດ,ຫຸບຕີ.

Lass ,, ແລຊຊ໌ ,, ຍິງສາວ,ນ້ອງສາວ,ຍິງຄູ່ຮັກ.

Latch ,, ແລັຊ໌ ,, ໄລກອນ,ໃສ່ໄລກອນ,ອັດປະຕູ.

ເຮົາຈະເຫັນວ່າ ແຕ່ລະຄຳສັພທ໌ອ່ານຄືກັນ ແຕ່ລົງທ້າຍດ້ວຍໂຕສກົດຕ່າງກັນ ຄວາມໝາຍກໍຕ່າງກັນຢ່າງສິ້ນເຊີງ.

ເມື່ອເຫັນເປັນເຊັ່ນນີ້,ຂ້າພເຈົ້າຈຶ່ງຂໍຢືນຢັນວ່າ: ພາສາຂຽນຂອງລາວເຮົາຍັງທຽບກັບສາກົລບໍ່ໄດ້, ນີ້ລາງ **ທ່ານກູມີ ວົງສ໌ ວິຈິຕຣ໌** ສມັຍທີ່ທ່ານເປັນປະທານສູນຍ໌ກາງແນວລາວສ້າງຊາຕ ປີ **ຄ.ສ ໑໙໗໘-໘໐** ທ່ານເຄີຍເວົ້ານຳພຣະສົງພ໌ສາມເຕຣເລື້ອຍໆວ່າ:"ພາສາລາວຂອງພວກເຮົາຍັງບໍ່ທັນອຸດົມສົມບູຣຕ໌ເທື່ອ ເພາະວ່າພວກເຮົາໄດ້ອີງໃສ່ສພາພການຂອງບ້ານເມືອງໃນຣະຍະຜ່ານມາ ເພື່ອໃຫ້ມັນງ່າຍແກ່ຜູ້ສຶກສາຮ່ຳຮຽນ ພວກເຮົາເລີຍຂຽນຕາມພາສາເວົ້າ, ໃນໂອກາສຕໍ່ໄປຖ້າວ່າ ຄຣູບາອາຈາຣຍ໌,ພຣະສົງພ໌ສາມເຕຣທາກມີຄວາມຮູ້ດ້ານພາສາປາລີ-ສັນສກຣິຕ ຫຼື ດ້ານອັກສຣສາສຕຣ໌ກໍສາມາຣຖປຣິວັຕຣ໌ຄືນໃໝ່ໄດ້".

ຂ້າພເຈົ້າຈຶ່ງໄດ້ຄິດຄົ້ນຄວ້າໄວຍາກຣຕ໌ນີ້ຂຶ້ນມາ ເພື່ອໃຫ້

ບັຣດາທ່ານຜູ້ຮູ້ ແລະ ອນຸຊົນໄດ້ສຶກສາຄົ້ນຄວ້າ **ໂດຍອີງໃສ່ໄວຍາກຣຓ໌ລາວພາຄອັກຂຣວິທີ ສບັບພຸທສບັຓທິຕສພາຈັນທນ໌ບູຣີ, ໄວຍາກຣຓ໌ລາວຂອງ ທ່ານ ພູມີ ວົງສ໌ວິຈິຕຣ໌,** Advanced English Grammar ຯລຯ ອີກເປັນຫຼັກ. ຢ່າງໃດກໍຕາມ, ກາຣຄົ້ນຄວ້າເທື່ອນີ້ອາຈມີຫຼາຍສິ່ງຫຼາຍອັນຂາດຕົກບົກຜ່ອງ ຈຶ່ງໄຄ່ຂໍຝາກໄວ້ກັບພໍ່ແມ່ຄຣູບາອາຈາຣຍ໌, ພຣະສົງຄ໌ສາມເນຣ ຕລອດເຖິງ ບັຣດາທ່ານທີ່ໄດ້ສຶກສາຄົ້ນຄວ້າພາສາປາລີ-ສັນສກຣິຕ ທັງຫຼາຍ ຈົ່ງຊ່ວຍກັນປັບປຸງແກ້ໄຂໃຫ້ດີຂຶ້ນເທື່ອລະກ້າວ.

**ພາສາບອກຊາຕ,ມາຣຍາທບອກສກຸລ**

(ພາສາສົມບູຣຓ໌ຊາຕກໍສົມບູຣຓ໌, ພາສາວິບັຕຊາຕກໍວິບັຕໄປດ້ວຍ)

**ຮັກເຊື້ອຊາຕ ຕ້ອງດຸໝັ່ນ ໃນກາຣສຶກສາ**<br>
**ຮັກພາສາ ຕ້ອງດຸໝັ່ນ ໃນກາຣຄົ້ນຄວ້າ**<br>
**ຮັກຕົວເອງ ຕ້ອງດຸໝັ່ນ ໃນໜ້າທີ່ກາຣ**<br>
**ຮັກລູກຫຼານ ຕ້ອງດຸໝັ່ນ ອົບຮົມສັ່ງສອນ.**

# ພາຄທີ I
## ອັກຂຣວິธີ:

**ອັກຂຣວິธີ** ໝາຍເຖິງຮູປແບບ ຫຼື ວິธີການຂຽນໂຕອັກษຣ, ໂຕເລຂ,ລວມທັງວັຕຍຸຕ ແລະ ເຄື່ອງໝາຍອື່ນໆ ທີ່ມີຢູ່ໃນການຂຽນພາສາລາວ.

ໂຕອັກษຣລາວທັງໝົດມີ ໕໕ ໂຕ,ແບ່ງອອກເປັນພຍັญชນະເຄົ້າ ຫຼື ພຍັญชນະດ່ຽວ ໔໑ ໂຕ ແລະ ມີສຣະເຄົ້າ ຫຼື ສຣະດ່ຽວ ໑໔ ໂຕ.

ໃນນັ້ນ,ຍັງມີພຍັญชນະປະສົມ ๗ ໂຕ,ພຍັญชນະຄວບ ໓ ໂຕ.ສຣະປະສົມ ໑໕ ໂຕ ແລະ ສຣະ ປະສົມພຍັญชນະມີ ໒໒ ໝວດມີ ๗໔໔ ໂຕດັ່ງນີ້:

## ໑ ວ່າດ້ວຍພຍັญชນະ:

**ພຍັญชນະ** ແມ່ນໂຕອັກษຣ ທີ່ເອົາສຽງຂອງຕົນໄປເປັນພື້ນສຽງຂອງຄຳເວົ້າ ພຍັญชນະໃນພາສາລາວປະກອບມີ ໓ ປະເພທຄື:

**໑. ພຍັญชນະເຄົ້າ ຫຼື ພຍັญชນະດ່ຽວ.**

**໒. ພຍັญชນະປະສົມ.**

**໓. ພຍັญชນະຄວບ.**

໑. <u>ພຍັญชນະເຄົ້າ ຫຼື ພຍັญชນະດ່ຽວ</u>:

**ມີທັງໝົດ ໔໑ ໂຕຄື:**

ກ ຂ ຄ ຆ ງ ຈ ສ ຊ ຌ ຍ ຎ ຏ ຐ ຑ ຒ ຓ ດ ຕ ຖ ທ ຘ ນ ບ ປ ຜ ຝ ພ ຟ ຠ ມ ຢ ຣ ລ ວ ສ ຫ ອ ຮ

ອຸປມາໃຫ້ເຫັນດັ່ງຕໍ່ໄປນີ້:

| ພຍັນຊນະເຄົ້າ | ຊື່ຄວາມໝາຍ | ທຽບສຽງ |
|---|---|---|
| ກ | ໄກ່ | K |
| ຂ | ໄຂ່ | Kh |
| ຄ | ຄວາຍ | C |
| ຆ | ຄ ຣະຆັງ (ລະຄັງ) | Kh |
| ງ | ງູ | Ng |
| ຈ | ຈອກ | Ch |
| ສ | ເສືອ | S |
| ຨ | ສ ຨາລາ (ສາລາ) | S |
| ຩ | ສ ຣືຩີ (ລືສີ) | S |
| ຉ | ສ ຉິ່ງ (ສິ່ງ) | S |
| ຊ | ຊ້າງ | Z |
| ຌ | ຊ (ໂຌ່) (ໂຊ່) | Zh |
| ຍ | ຍັກຂ໌(ຍັກຩ໌)(ຍັກ) | Y |
| ຎ | ຍ ສັພພັຎຎູ(ສັບພັນຍູ) | Yh |
| ດ | ເດັກ | D |
| ຑ | ດ ນາງມຸນໂຑ(ໂດ) | Dh |
| ຕ | ຕາ | T |
| ຏ | ຕ ປຏັກ(ປະຕັກ) | Th |
| ຖ | ຖົງ | Th |
| ຐ | ຖ ປຐົມ (ປະຖົມ) | Th |
| ຒ | ຖ ຜູ່ເຒົ້າ (ເຖົ້າ) | Th |
| ທ | ທຫາຣ (ທະຫານ) | Th |

| | | |
|---|---|---|
| ຘ | ທ ຘຸງ (ທຸງ) | Th |
| ນ | ນົກ | N |
| ຎ | ນ ເຎຣ (ເນນ) | Nh |
| ບ | ແບ້ | B |
| ປ | ປາ | P |
| ຜ | ເຜິ້ງ | Ph |
| ຝ | ຝົນ | Fh |
| ພ | ພານ,ພູຄ້ຽວໝາກ ພ | Ph |
| ຠ | ຠຄວາ(ພະຄະວາ) | Ph |
| ຟ | ໄຟ | F |
| ມ | ແມວ | M |
| ຢ | ຢາ | Yh |
| ຣ | ຣາຊສີຫ໌ (ລາຊະສີ) | R |
| ລ | ລີງ | L |
| ຬ | ລ ກີຬາ (ກີລາ) | Lh |
| ວ | ວີ | V |
| ຫ | ຫ່ານ | Hh |
| ອ | ໂອ | Or |
| ຮ | ເຮືອນ | H |

**ໝາຍເຫດ:**

໑. ພຍັນຊນະທີ່ມາຈາກຠາສາປາລີມີ ໓໓ ໂຕ ແລະ ສຣະ ໘ ໂຕ ລວມເປັນ ໔໑ ໂຕດັ່ງນີ້:

ອ ອາ ອິ ອີ ອຸ ອູ ເອ ໂອ

ກ ຂ ຄ ຆ ງ, ຈ ຉ ຊ ຌ ຎ, ຏ ຐ ຑ ຒ ຓ,

ຕ ຖ ທ ຘ ນ,ປ ຜ ພ ຠ ມ,ຢ ຣ ລ ວ ສ ຫ ຬ ໍ

໔. ພຍັຎຊນະທີ່ນຳໃຊ້ແບບລາວເດີມມີ ໔໑ ໂຕ(ບໍ່ມີສຣະປົນຢູ່ນຳ) ດັ່ງນີ້: **ກ ຂ ຄ ຆ ງ, ຈ ຉ ຊ ຌ ຎ, ຏ ຐ ຑ ຒ ຓ,**

**ດ ຕ ຖ ທ ຘ, ນ ບ ປ ຜ ຝ, ພ ຟ ຠ ມ ຢ,**

**ຍ ຣ ລ ວ ສ, ຨ ຩ ຫ ຬ ອ ຮ.**

໕. ພຍັຎຊນະແບບລາວ(ໃນໄວຍາກຣຓ໌ສບັບນີ້)ມີ ໔໑ ໂຕດັ່ງນີ້:

**ກ ຂ ຄ ຆ ງ ຈ ສ ຨ ຉ ຩ ຊ ຌ ຍ ຎ ດ ຑ ຕ ຏ ຖ ຐ ຒ ທ ຘ ນ ຓ ບ ປ ຜ ຝ ພ ຠ ຟ ມ ຢ ຣ ລ ຬ ວ ຫ ອ ຮ.** (ສຳຫຼັບໂຕ **ຨ ຩ** ມາຈາກສັນສກຣິຕ ແລະ **ດ ບ ຝ ຟ ຢ ຣ** ແມ່ນລາວປະດິຩຐ໌ເອງ)

ອີງໃສ່ຫຼັກຖານທາງປະວັຕສາສຕຣ໌ແລ້ວ ໂຕອັກຩຣທັງໝົດທີ່ຍົກມານີ້ ກໍແມ່ນຄົນລາວເຮົາປະດິຩຐ໌ເອງທັງນັ້ນ ໂດຍຜ່ານຂບວນວິວັຒນ໌ໃນການປະສົມປະສານຂອງຫຼາຍຊົນຊາຕ,ຊົນເຜົ່າ ທີ່ມີພຣົມແດນຕິດຈອດກັນ,ພຽງແຕ່ເພິ່ນໃຊ້ກົຏເກຓຑ໌ ຂອງຠາສາປາລີ-ສັນສກຣິຕມາເປັນຫຼັກໄວຍາກຣຓ໌ເທົ່ານັ້ນ.

## ໔. <u>ພຍັຎຊນະປະສົມມີ ໗ ໂຕຄື:</u>

**ພຍັຎຊນະປະສົມ** ແມ່ນພຍັຎຊນະທີ່ມາຈາກອັກຩຣສຽງຕ່ຳ ເມື່ອປະສົມກັບພຍັຎຊນະໂຕ **ຫ** ທີ່ເປັນອັກຩຣສູງແລ້ວ ສຽງຂອງມັນກໍກາຍເປັນສຽງອັກຩຣສູງຂຶ້ນມາທັນທີດັ່ງນີ້:

**ຫງ ຫຽ ໜ ໝ ຫຣ ຫຼ ຫວ** (ພຍັຎຊນະປະສົມ **ຫງ,ຫຽ,ຫຣ,ຫຼ,ຫວ** ນີ້ເຮົາຄວຣເຮັດເປັນໂຕດຽວຄືກັບໂຕ **(ໜ,ໝ)** ເພື່ອບໍ່ໃຫ້ມັນສັບສົນກັບພຍັຎຊນະຄວບ)ດັ່ງນີ້:

ຫງ= =Ng

ຫຽ= =Yh

ຫຣ= =Rh

ຫລ= =Lh

ຫວ= =Vh

**ໃນນັ້ນ,ຍັງໄດ້ແບ່ງພະຍັນຊະນະອອກໄປຕາມສຽງດັ່ງນີ້:**

໑. ອັກສອນສຽງຕ່ຳມີ **໑໔** ໂຕຄື: **ຄ ງ ຊ ຍ ທ ນ ພ ຟ ມ ຣ ລ ຮ ວ ຣ.**

໒. ອັກສອນສຽງກາງມີ **໑໓** ໂຕຄື: **ກ ໝ ຈ ສຸ ດ ໜ ຕ ຜ ຂ ຓ ບ ປ ຫ ຢ ຝ ອ.**

໓. ອັກສອນສຽງສູງມີ **໑໑** ໂຕຄື: **ຂ ສ ສ ຢ ລ ຖ ຖ ໝ ຜ ຝ ຫ.**

### ໓. <u>ພະຍັນຊະນະຄວບ</u>:

**ພະຍັນຊະນະຄວບມີ ໓** ໂຕຄື: **ຣ,ລ,ວ** ໃຊ້ຄວບກັບພະຍັນຊະນະເຄົ້າໄດ້ທຸກໆໂຕ ນອກຈາກໂຕຂອງພວກມັນເອງເຊັ່ນ:

**ກ. ພະຍັນຊະນະຄວບໂຕ ຣ:** ສາມາຣຖຄວບກັບພະຍັນຊະນະເຄົ້າໂຕອື່ນໆໄດ້ ນອກຈາກໂຕ **ຣ** ດ້ວຍກັນ, ຄຳທີ່ໃຊ້ໂຕຄວບນີ້ສ່ວນຫຼາຍເປັນສັພທ໌ທີ່ມາຈາກພາສາປາລີ - ສັນສກຣິຕເຊັ່ນ: ກຣຸງສົງກຣານຕ໌, ປຣັຍຫນີຍ໌, ປຣັຊຍາ, ນັກປຣາຊຍ໌,ປຣາຊັຍ, ປຣາສັຍ, ປຣາສັຍ, ປຣາຖນາ, ປຣາຣົກ, ປຣາສຈາກ, ປຣມັຕຖ໌, ສາສຕຣາຈາຣຍ໌,ປຣິສນາ,ອນຸປຣິຍາຍ,ປຣິຍາຍຕຣີ, ປຣິຍາຍໂທ, ປຣິຍາຍເອກ ຯລຯ.

**ຂ. ພະຍັນຊະນະຄວບໂຕ ລ:** ສາມາຣຖຄວບກັບພະຍັນຊະນະເຄົ້າທຸກໆໂຕ ນອກຈາກໂຕ **ລ** ດ້ວຍກັນເຊັ່ນ: **ຄລາວ, ບາງ**

**ຄັ້ງຄລາວ**ຯລຯ (ແຕ່ແບບນີ້ລາວເຮົາບໍ່ໄດ້ໃຊ້ມາດົນແລ້ວ), ເຖິງຢ່າງໃດກໍຕາມເຮົາຄວຣໃຊ້ຄືນ ເພາະວ່າມັນຈຳເປັນດັ່ງນີ້: **ຄາວ** ແປວ່າ ສາບຄາວ,ຄາວປາ,ເໝັນຄາວ. ຖ້າເຮົາໃຊ້ວ່າ: **ບາງຄັ້ງຄາວ** ກໍໝາຍເຖິງສາບຄາວ,ເໝັນຄາວບາງຄັ້ງເປັນຕົ້ນ.

**ຄ. ພຍັນຊນະຄວບໂຕ ວ:** ກໍສາມາຣຖໃຊ້ຄວບກັບ ພຍັນຊນະເຄົ້າທຸກໆໂຕນອກຈາກໂຕ **ວ** ດ້ວຍກັນ ແລະ ນິຍົມ ໃຊ້ຫຼາຍເຊັ່ນ:

| | | | | |
|---|---|---|---|---|
| ກ ກັບ ວ | ຄວບເປັນ | ກ່ວໍ | ໂຕຢ່າງ | ແກວ່ງໄກວ,ກວາງ ຯລຯ. |
| ຂ ກັບ ວ | ,, | ຂ່ວໍ | ,, | ແຂວງ,ໄຂວ່ເຂວ,ຂົນຂວາຍຯລຯ. |
| ຄ ກັບ ວ | ,, | ຄ່ວໍ | ,, | ຄວາມ,ຄວາຍ ຯລຯ. |
| ຆ ກັບ ວ | ,, | ຆ່ວໍ | ,, | ປິ່ນຆວ້າງໆ |
| ງ ກັບ ວ | ,, | ງ່ວໍ | ,, | ງົມງວາຍ ຯລຯ. |
| ຈ ກັບ ວ | ,, | ຈ່ວໍ | ,, | ຈວ້າຍກວ້າຍ,ໄຈວ້ງ |
| ສ ກັບ ວ | ,, | ສ່ວໍ | ,, | ສວ່າງ,ສວາຍ ຯລຯ. |
| ຉ ກັບ ວ | ,, | ຉ່ວໍ | ,, | ໂຉວກາພ(ຄວາມເປັນຢູ່ໃນວັນຂ້າງໜ້າ) |
| ຢ ກັບ ວ | ,, | ຢ່ວໍ | ,, | ຄຳລາວບໍ່ໃຊ້ |
| ຝ ກັບ ວ | ,, | ຝ່ວໍ | ,, | ຝວຽງບ່າ(ບ່ຽງຜ້າປິດບ່າຊ້າຍເປີດຂວາ) |
| ຊ ກັບ ວ | ,, | ຊ່ວໍ | ,, | ຊວ້ານ,ຊວາດຣູ້ ຯລຯ. |
| ຌ ກັບ ວ | ,, | ຌ່ວໍ | ,, | ຄຳລາວບໍ່ໃຊ້ |
| ຍ ກັບ ວ | ,, | ຍ່ວໍ | ,, | ຍວ່າງໆ ຯລຯ. |
| ຎ ກັບ ວ | ,, | ຎ່ວໍ | ,, | ຄຳລາວບໍ່ໃຊ້ |
| ດ ກັບ ວ | ,, | ດ່ວໍ | ,, | ດວາບໆ |
| ຑ ກັບ ວ | ,, | ຑ່ວໍ | ,, | ຄຳລາວບໍ່ໃຊ້ |
| ຕ ກັບ ວ | ,, | ຕ່ວໍ | ,, | ຫງ້ຳເຂົ້າກະຕວ້າຍໆ ຯລຯ. |

| | | | | |
|---|---|---|---|---|
| ຎ ກັບ ອ | ,, | ຎ່ໍ | ,, | ຄໍາລາວບໍ່ໃຊ້ |
| ຖ ກັບ ອ | ,, | ຖ່ໍ | ,, | ຖວາຍ ຯລຯ. |
| ຑ ກັບ ອ | ,, | ຑ່ໍ | ,, | ຄໍາລາວບໍ່ໃຊ້ |
| ຒ ກັບ ອ | ,, | ຒ່ໍ | ,, | ຄໍາລາວບໍ່ໃຊ້ |
| ທ ກັບ ອ | ,, | ທ່ໍ | ,, | ທວາຍ,ທວານ ຯລຯ. |
| ຘ ກັບ ອ | ,, | ຘ່ໍ | ,, | ຄໍາລາວບໍ່ໃຊ້ |
| ນ ກັບ ອ | ,, | ນ່ໍ | ,, | ນວາດເສັ້ນ ຯລຯ. |
| ຓ ກັບ ອ | ,, | ຓ່ໍ | ,, | ຄໍາລາວບໍ່ໃຊ້ |
| ບ ກັບ ອ | ,, | ບ່ໍ | ,, | ບວານ,ບວາຍ ຯລຯ. |
| ປ ກັບ ອ | ,, | ປ່ໍ | ,, | ປ່ວານ,ປ່ວາຍ ຯລຯ. |
| ຜ ກັບ ອ | ,, | ຜ່ໍ | ,, | ຜວາ,ຜັນຜວານ ຯລຯ. |
| ຝ ກັບ ອ | ,, | ຝ່ໍ | ,, | ຝວາດຝວານ ຯລຯ. |
| ພ ກັບ ອ | ,, | ພ່ໍ | ,, | ພວານ,ພວາມ ຯລຯ. |
| ຠ ກັບ ອ | ,, | ຠ່ໍ | ,, | ຄໍາລາວບໍ່ໃຊ້ |
| ຟ ກັບ ອ | ,, | ຟ່ໍ | ,, | ຟັ່ນເຟື່ອນ ຯລຯ. |
| ມ ກັບ ອ | ,, | ມ່ໍ | ,, | ມວານ,ມວາຍ ຯລຯ. |
| ຢ ກັບ ອ | ,, | ຢ່ໍ | ,, | ຢວານ,ຢ່ວາຍ,ຢວາກ ຯລຯ. |
| ຣ ກັບ ອ | ,, | ຣ່ໍ | ,, | ຣວານລາມ ຯລຯ. |
| ລ ກັບ ອ | ,, | ລ່ໍ | ,, | ບ່າງລວ້າ ຯລຯ. |
| ຨ ກັບ ອ | ,, | ຨ່ໍ | ,, | ຄໍາລາວບໍ່ໃຊ້ |
| ຫ ກັບ ອ | ,, | ຫ່ໍ | ,, | ຫວານຄືນ,ຫີນຫວາຍ ຯລຯ. |
| ອ ກັບ ອ | ,, | ອ່ໍ | ,, | ອວ່າຍໜ້າ ຯລຯ. |
| ຮ ກັບ ອ | ,, | ຮ່ໍ | ,, | ມື້ຮວ້າງມື້ຮວາຍ ຯລຯ. |

<u>ໝາຍເຫດ:</u>

**ພຍັນຊນະຄວບ ຫຣ:** ຕ່າງກັບສຽງພຍັນຊນະປະສົມ **ຫຣ** ເພາະວ່າໂຕຄວບມັນອ່ານອອກສຽງ **ຫ່ຣ່** ເປັນສຽງກາງຄື: **ຫຣານ** ອ່ານວ່າ **ຫະຣານ**...(ແຕ່ຄວາມນີ້ລາວເຮົາບໍ່ໃຊ້),ຖ້າໃຊ້ກໍເປັນຮູບພຍັນຊນະປະສົມຫຼາຍກວ່າເຊັ່ນ: ປະເທສອີຫຣັກ, ປະເທສອີຫຣານ ຯລຯ.

**ພຍັນຊນະຄວບໂຕ ຫລ:**ກໍຕ່າງກັບພຍັນຊນະປະສົມ **ຫຼ** ເພາະວ່າໂຕຄວບມັນອ່ານອອກສຽງ **ຫ່ລ** ເປັນສຽງກາງຄື: **ຫລານ** ອ່ານວ່າ **ຫະລານ**...(ແຕ່ຄວາມນີ້ລາວເຮົາບໍ່ໃຊ້),ຈະໃຊ້ໃນຮູບ ພຍັນຊນະປະສົມຢ່າງດຽວເຊັ່ນ: **ລູກຫຼານ,ຫຼວງຫຼາຍ ຯລຯ.**

**ພຍັນຊນະຄວບໂຕ ຫວ:** ຕ່າງກັບສຽງພຍັນຊນະປະສົມ **ຫວ** ເພາະວ່າໂຕຄວບມັນອ່ານອອກສຽງ **ຫ່ວ່** ເປັນສຽງກາງຄື: ຫວານ ຄືນ,ຫົນຫວາຍຯລຯ ສ່ວນພຍັນຊນະປະສົມອ່ານອອກ ສຽງເປັນສຽງສູງເຊັ່ນ: ແຫວນ, ຫວີ, ເຄື່ອນໄຫວ, ໄຫວພິບ, ຫວາຍ ຯລຯ.

ຈຳນວນພຍັນຊນະທີ່ກ່າວມາຂ້າງເທິງນີ້ ແບ່ງອອກເປັນ ໒ ຊນິດຄື: **ໂຕອັກສອນແກນ ແລະ ໂຕສກົດ.**

**ອັກສອນແກນ** ແມ່ນໂຕພຍັນຊນະເດົ້າ,ພຍັນຊນະປະສົມ ແລະ ພຍັນຊນະຄວບ ທີ່ເອົາສຽງຂອງຕົນໄປເປັນແກນສຽງຂອງ ຄຳເວົ້າ, **ສ່ວນໂຕສກົດນັ້ນ** ແມ່ນໂຕພຍັນຊນະທີ່ເອົາສຽງຂອງຕົນໄປຜັນສຽງສຣະໃນຄຳເວົ້າ ໃຫ້ກາຍເປັນຄຳຕາຍ ຫຼື ຄຳເປັນ ຕາມສຽງສັມຜັສຂອງໂຕສກົດ.

ສ່ວນທີ່ເປັນທັງອັກສອນແກນ ແລະ ໂຕສກົດນັ້ນມີ **໑໙** ໂຕຄື:

**ກ ຂ ຄ ໜ ງ ຈ ສ ສ ຮ ວ ຊ ຊ ຍ ໝ ດ ທ ຕ ຜ ຖ**

**ຏ ຐ ທ ຘ ນ ຓ ບ ປ ຜ ຝ ພ ຠ ຟ ມ ຢ ຣ ລ ຬ ວ ຫ**
(ຍົກເວັ້ນໂຕ **ອ ຮ** ທີ່ເປັນໂຕສະກົດບໍ່ໄດ້).

ໂຕສະກົດທັງ **໓໙** ໂຕນີ້ແບ່ງອອກເປັນໂຕສະກົດຕາຍ ທີ່ບໍ່ຜັນສຽງໄປຕາມວັນນະຍຸດໄດ້ ແລະ ໂຕສະກົດເປັນທີ່ຜັນສຽງໄປຕາມວັນນະຍຸດໄດ້ດັ່ງນີ້:

**ກ. ໂຕສະກົດຕາຍມີ ໒໗ ໂຕຄື:**

**ກ,ຂ,ຄ,ຆ,ຈ,ສ,ຨ,ຩ,ຉ,ຊ,ຌ,ດ,ຑ,ຕ,ຒ,ຖ,ຏ,ຐ,ທ,ຘ ບ,ປ,ຜ,ຝ,ພ,ຠ,ຟ** ບໍ່ສາມາດຖືຜັນສຽງໄປຕາມວັນນະຍຸດໄດ້ເຊັ່ນ: ກັກ,ກັ່ກ,ກັ້ກ,ງັບ,ງັ່ບ,ງັ້ບ,ວັດທະນະທັມ,ວັ່ດທະນະທັມ, ວັ້ດທະນະທັມ, ຣັກບາລ, ຣັ່ກບາລ,ຣັ້ກບາລ ຯລຯ.

ເຮົາຈະເຫັນວ່າ: ເມື່ອໃສ່ວັນນະຍຸດລົງໄປແລ້ວ ສຽງຂອງມັນຍັງຮັກສາໄວ້ຄືເກົ່າ ບໍ່ເປັນໄປຕາມສຽງຂອງໄມ້ເອກ ຫຼື ໄມ້ໂທເລີຍ (ດຽວນີ້ເພິ່ນໃຊ້ແຕ່ **໓** ໂຕຄື: **ກ ດ ບ** ເທົ່ານັ້ນ).

**ຂ. ໂຕສະກົດເປັນມີ ໑໑ ໂຕຄື: ງ,ຍ,ຎ,ນ,ຓ,ມ,ຢ,ຣ ລ,ຬ,ວ** ສາມາດຖືຜັນສຽງໄປຕາມວັນນະຍຸດໄດ້ເຊັ່ນ: ກັງ,ກັ່ງ,ກັ້ງ,ລັນ, ລັ່ນ,ລັ້ນ ຯລຯ (ດຽວນີ້ເພິ່ນໃຊ້ແຕ່ **໕** ໂຕຄື: **ງ ຍ ນ ມ ວ**).

**ຄ. ໂຕສະກົດພິເສດມີ ໑ ໂຕຄື: ຫ** ໂຕ **(ຫ)** ນີ້ເປັນໂຕອັກສອນສູງ,ນອກຈາກທຳໜ້າທີ່ເປັນໂຕອັກສອນແກນ, ເປັນພະຍັນຊະນະຄວບ ແລະ ພະຍັນຊະນະປະສົມແລ້ວ ຍັງທຳໜ້າທີ່ເປັນໂຕສະກົດອີກດ້ວຍເອີ້ນວ່າ: **ໂຕສະກົດພິເສດ** ຫຼື **ການັນຕ໌** ກໍ່ວ່າໄດ້,ແຕ່ເວລາຂຽນຕ້ອງໃສ່ໄມ້ **ວັນນະພາດ** ຢູ່ເທິງຄື: ສົງເຄາະຫ໌, ວິເຄາະຫ໌, ອະນຸເຄາະຫ໌,ສິງຫ໌,ສັປດາຫ໌ ຯລຯ. ທີ່ວ່າມັນພິເສດກໍ່ຍ້ອນວ່າມັນທຳໜ້າທີ່ບໍ່ຄືກັບໂຕສະກົດໂຕອື່ນໆເຊັ່ນ: ກັຫ,ດິຫ,ສິຫ ຯລຯ. (ບໍ່ໄດ້ຄວາມໝາຍ ແລະ ເວລາອ່ານບໍ່ໃຫ້ອອກສຽງ).

**ໂຕສກົດທີ່ໃຊ້ແທນກັນໄດ້ມີ:**

ໂຕສກົດ **ກ** ໃຊ້ **ຂ,ຄ** ແລະ **ฆ** ແທນໄດ້.

ໂຕສກົດ **ດ** ໃຊ້ **จ,ส,ศ,ษ,ฉ,ช,ซ,ต,ฎ,ฏ,ฐ,ฑ,ฒ,ท,ธ** ແທນໄດ້.

ໂຕສກົດ **ນ** ໃຊ້ **ณ,ญ,ร,ล** ແລະ **ฬ** ແທນໄດ້.

ໂຕສກົດ **ບ** ໃຊ້ **ປ,ຜ,ຝ,ພ,ภ** ແລະ **ຟ** ແທນໄດ້.

ດຽວນີ້ເພິ່ນໃຊ້ພຽງແຕ່ໂຕ **ກ ດ ນ ບ** ເທົ່ານັ້ນ (ບໍ່ມີໂຕແທນ).

## ໔ ວ່າດ້ວຍສຣະ:

**ສຣະ** ແມ່ນໂຕອັກษรທີ່ປະສົມກັບພຍັญชນະ ເພື່ອໃຫ້ເປັນພຍາງຄ໌ ຫຼື ຄຳເວົ້າ ໂດຍເອົາສຽງຂອງຕົນ ໄປຜັນສຽງຂອງພຍັญชນະ ໃຫ້ກາຍເປັນພຍາງຄ໌ຕາຍ ຫຼື ພຍາງຄ໌ເປັນມີ **໔** ປະເภทຄື:

### ໑. ສຣະເຄົ້າ ຫຼື ສຣະດ່ຽວມີ ໑໔ ໂຕຄື:

ເພິ່ນເອີ້ນສຣະ **໑໔** ໂຕນີ້ວ່າເປັນສຣະເຄົ້າເພາະວ່າ ສຣະເຫຼົ່ານີ້ມີສຽງໃນໂຕຂອງມັນເອງ ໂດຍບໍ່ໄດ້ປະສົມກັບສຣະ ຫຼື ພຍັญชນະໂຕອື່ນໆດັ່ງນີ້: **ອະ ອາ ອິ ອີ ອຶ ອື ອຸ ອູ ເອ ໂອ ໄອ ໃອ ອໍ ອຽ.**

### ໔. ສຣະປະສົມມີ ໑໔ ໂຕຄື:

ນອກຈາກສຣະເຄົ້າ **໑໔** ໂຕນັ້ນຍັງບໍ່ພຽງພໍເພາະວ່າ ມັນບໍ່ມີສຽງຄົບຖ້ວນຕາມສຽງທີ່ໃຊ້ໃນກາສາລາວ, ເພື່ອໃຫ້ມີສຽງຄົບຖ້ວນນັ້ນເພິ່ນຈຶ່ງເອົາສຣະເຄົ້າມາປະສົມກັນເອງ ໂດຍມີໄມ້ກັນ x̆ ແລະ ໄມ້ກົງ x̂ ປະສົມກັບພຍັญชນະໂຕ ຍ(ຽ),ວ ແລະ ອ. (ໂຕ ຍ(ຽ),ວ ແລະ ອ) ຈະກາຍເປັນສຣະຂຶ້ນມາເມື່ອປະກອບກັບສຣະອື່ນ ມີ **໑໔** ໂຕຄື: **ແອະ ແອ ເອະ ເອາະ ອົວະ ອົວ ເອົາ ເອິ ເອີ ໂອະ ເອືອ ເອືອ ອຳ (ເອຍ,ເອຽ) ແລະ (ເອັຍ,ເອັຽ).**

### ໓. <u>ສຣະ ປະສົມກັບພຍັນຊນະ ປະກອບດ້ວຍ ໒໒ ໝວດມີ ໗໔໔ ໂຕຄື:</u>

ສຣະປະສົມທີ່ເປັນແມ່ກັກ ກໍຕື່ມໄມ້ກັນ x̆ ໃສ່ ແລະ ສຣະປະສົມທີ່ເປັນແມ່ກົກ ກໍຕື່ມໄມ້ກົງ x̂ ໃສ່ດັ່ງນີ້:

**໑.** ອັກ ອັຂ ອັຄ ອັຆ ອັງ ອັຈ ອັສ ອັຨ ອັຩ ອັຉ ອັຊ ອັຌ ອັຍ
ອັຎ ອັດ ອັຏ ອັຕ ອັຐ ອັຖ ອັຑ ອັຒ ອັທ ອັຘ ອັນ ອັຓ ອັບ ອັປ
ອັຜ ອັຝ ອັພ ອັຟ ອັຠ ອັມ ອັຢ ອັຣ ອັລ ອັຬ **(໓໗)**

**໒.** ອາກ ອາຂ ອາຄ ອາຆ ອາງ ອາຈ ອາສ ອາຨ ອາຩ ອາຉ ອາຊ
ອາຌ ອາຍ ອາຎ ອາດ ອາຏ ອາຕ ອາຐ ອາຖ ອາຑ ອາຒ ອາທ
ອາຘ ອານ ອາຓ ອາບ ອາປ ອາຜ ອາຝ ອາພ ອາຟ ອາຠ ອາມ
ອາຢ ອາຣ ອາລ ອາຬ ອາວ **(໓໘)**

**໓.** ອິກ ອິຂ ອິຄ ອິຆ ອິງ ອິຈ ອິສ ອິຨ ອິຩ ອິຉ ອິຊ ອິຌ ອິດ ອິຏ
ອິຕ ອິຐ ອິຖ ອິຑ ອິຒ ອິທ ອິຘ ອິນ ອິຓ ອິບ ອິປ ອິຜ ອິຝ ອິພ
ອິຟ ອິຠ ອິມ ອິຣ ອິລ ອິຬ ອິວ **(໓໕)**

**໔.** ໄອກ ໄອຂ ໄອຄ ໄອຆ ໄອງ ໄອຈ ໄອສ ໄອຨ ໄອຩ ໄອຉ
ໄອຊ ໄອຌ ໄອຍ ໄອຎ ໄອດ ໄອຏ ໄອຕ ໄອຐ ໄອຖ ໄອຑ
ໄອຒ ໄອທ ໄອຘ ໄອນ ໄອຓ ໄອບ ໄອປ ໄອຜ ໄອຝ ໄອພ
ໄອຟ ໄອຠ ໄອມ ໄອຢ ໄອຣ ໄອລ ໄອຬ ໄອວ **(໓໘)**

**໕.** ອຶກ ອຶຂ ອຶຄ ອຶຆ ອຶງ ອຶຈ ອຶສ ອຶຨ ອຶຩ ອຶຉ ອຶຊ ອຶຌ ອຶດ ອຶຏ
ອຶຕ ອຶຐ ອຶຖ ອຶຑ ອຶຒ ອຶທ ອຶຘ ອຶນ ອຶຓ ອຶບ ອຶປ ອຶຜ ອຶຝ ອຶພ
ອຶຟ ອຶຠ ອຶມ ອຶຣ ອຶລ ອຶຬ ອຶວ **(໓໕)**

**໖.** ອີກ ອີຂ ອີຄ ອີຆ ອີງ ອີຈ ອີສ ອີຨ ອີຩ ອີຉ ອີຊ ອີຌ ອີດ ອີຏ
ອີຕ ອີຐ ອີຖ ອີຑ ອີຒ ອີທ ອີຘ ອີນ ອີຓ ອີບ ອີປ ອີຜ ອີຝ ອີພ
ອີຟ ອີຠ ອີມ ອີຣ ອີລ ອີຬ ອີວ **(໓໕)**

**໗.** ເອິກ ເອິຂ ເອິຄ ເອິຆ ເອິງ ເອິຈ ເອິສ ເອິຊ ເອິຌ ເອິຍ ເອິຎ
ເອິຏ ເອິຐ ເອິຑ ເອິດ ເອິຒ ເອິຕ ເອິຓ ເອິຖ ເອິຘ ເອິຩ ເອິທ
ເອິຮ ເອິນ ເອິຨ ເອິບ ເອິປ ເອິຜ ເອິຝ ເອິພ ເອິຟ ເອິຠ ເອິມ
ເອິຢ ເອິຣ ເອິລ ເອິຬ **(໓໗)**

**໘.** ເອີກ ເອີຂ ເອີຄ ເອີຆ ເອີງ ເອີຈ ເອີສ ເອີຊ ເອີຌ ເອີຍ ເອີຎ
ເອີຏ ເອີຐ ເອີຑ ເອີດ ເອີຒ ເອີຕ ເອີຓ ເອີຖ ເອີຘ ເອີຩ ເອີທ
ເອີຮ ເອີນ ເອີຨ ເອີບ ເອີປ ເອີຜ ເອີຝ ເອີພ ເອີຟ ເອີຠ ເອີມ
ເອີຢ ເອີຣ ເອີລ ເອີຬ **(໓໗)**

**໙.** ອິກ ອິຂ ອິຄ ອິຆ ອິງ ອິຈ ອິສ ອິຊ ອິຌ ອິຍ ອິຎ ອິຏ ອິດ ອິຒ
ອິຕ ອິຓ ອິຖ ອິຘ ອິຩ ອິທ ອິຮ ອິນ ອິຨ ອິບ ອິປ ອິຜ ອິຝ ອິພ
ອິຟ ອິຠ ອິມ ອິຣ ອິລ ອິຬ **(໓໔)**

**໑໐.** ອີກ ອີຂ ອີຄ ອີຆ ອີງ ອີຈ ອີສ ອີຊ ອີຌ ອີຍ ອີຎ ອີຏ ອີດ
ອີຒ ອີຕ ອີຓ ອີຖ ອີຘ ອີຩ ອີທ ອີຮ ອີນ ອີຨ ອີບ ອີປ ອີຜ ອີຝ
ອີພ ອີຟ ອີຠ ອີມ ອີຣ ອີລ ອີຬ **(໓໔)**

**໑໑.** ອຸກ ອຸຂ ອຸຄ ອຸຆ ອຸງ ອຸຈ ອຸສ ອຸຊ ອຸຌ ອຸຍ ອຸຎ ອຸຏ ອຸຐ
ອຸຑ ອຸດ ອຸຒ ອຸຕ ອຸຓ ອຸຖ ອຸຘ ອຸຩ ອຸທ ອຸຮ ອຸນ ອຸຨ ອຸບ ອຸປ
ອຸຜ ອຸຝ ອຸພ ອຸຟ ອຸຠ ອຸມ ອຸຢ ອຸຣ ອຸລ ອຸຬ **(໓໗)**

**໑໒.** ອູກ ອູຂ ອູຄ ອູຆ ອູງ ອູຈ ອູສ ອູຊ ອູຌ ອູຍ ອູຎ ອູຏ ອູຐ
ອູຑ ອູດ ອູຒ ອູຕ ອູຓ ອູຖ ອູຘ ອູຩ ອູທ ອູຮ ອູນ ອູຨ ອູບ ອູປ
ອູຜ ອູຝ ອູພ ອູຟ ອູຠ ອູມ ອູຢ ອູຣ ອູລ ອູຬ **(໓໗)**

**໑໓.** ເອັກ ເອັຂ ເອັຄ ເອັຆ ເອັງ ເອັຈ ເອັສ ເອັຊ ເອັຌ ເອັຍ
ເອັຎ ເອັຏ ເອັຐ ເອັຑ ເອັດ ເອັຒ ເອັຕ ເອັຓ ເອັຖ ເອັຘ ເອັຩ
ເອັທ ເອັຮ ເອັນ ເອັຨ ເອັບ ເອັປ ເອັຜ ເອັຝ ເອັພ ເອັຟ ເອັຠ
ເອັມ ເອັຢ ເອັຣ ເອັລ ເອັຬ ເອັວ **(໓໘)**

ເອທ ເອຨ ເອນ ເອຩ ເອບ ເອປ ເອຜ ເອຝ ເອພ ເອຠ ເອຟ
ເອມ ເອຢ ເອຣ ເອລ ເອຮ ເອວ **(໑໗)**

**໑໔.** ແອັກ ແອັຂ ແອັຄ ແອັຆ ແອັງ ແອັຈ ແອັຉ ແອັຊ ແອັຌ
ແອັຎ ແອັຏ ແອັຐ ແອັດ ແອັຑ ແອັຕ ແອັຒ ແອັຖ ແອັຘ ແອັຓ
ແອັທ ແອັຨ ແອັນ ແອັຩ ແອັບ ແອັປ ແອັຜ ແອັຝ ແອັພ ແອັຠ
ແອັຟ ແອັມ ແອັຢ ແອັຣ ແອັລ ແອັຮ ແອັວ **(໑໕)**

**໑໕.** ແອກ ແອຂ ແອຄ ແອຆ ແອງ ແອຈ ແອຉ ແອຊ ແອຌ
ແອຎ ແອຏ ແອຐ ແອດ ແອຑ ແອຕ ແອຒ ແອຖ ແອຘ ແອຓ
ແອທ ແອຨ ແອນ ແອຩ ແອບ ແອປ ແອຜ ແອຝ ແອພ ແອຠ
ແອຟ ແອມ ແອຢ ແອຣ ແອລ ແອຮ ແອວ **(໑໕)**

**໑໖.** ອັວກ ອັວຂ ອັວຄ ອັວຆ ອັວງ ອັວຈ ອັວຉ ອັວຊ ອັວຌ
ອັວຎ ອັວຏ ອັວຐ ອັວຍ ອັວຌ ອັວດ ອັວຑ ອັວຕ ອັວຒ ອັວຖ
ອັວຘ ອັວຓ ອັວທ ອັວຨ ອັວນ ອັວຩ ອັວບ ອັວປ ອັວຜ ອັວຝ
ອັວພ ອັວຠ ອັວຟ ອັວມ ອັວຢ ອັວຣ ອັວລ ອັວຮ **(໑໖)**

**໑໗.** ອວກ ອວຂ ອວຄ ອວຆ ອວງ ອວຈ ອວຉ ອວຊ ອວຌ
ອວຎ ອວຏ ອວຐ ອວຍ ອວຌ ອວດ ອວຑ ອວຕ ອວຒ ອວຖ
ອວຘ ອວຓ ອວທ ອວຨ ອວນ ອວຩ ອວບ ອວປ ອວຜ ອວຝ
ອວພ ອວຠ ອວຟ ອວມ ອວຢ ອວຣ ອວລ ອວຮ **(໑໖)**

**໑໘.** ອັອກ ອັອຂ ອັອຄ ອັອຆ ອັອງ ອັອຈ ອັອຉ ອັອຊ ອັອຌ
ອັອຎ ອັອຏ ອັອຐ ອັອຍ ອັອຌ ອັອດ ອັອຑ ອັອຕ ອັອຒ ອັອຖ
ອັອຘ ອັອຓ ອັອທ ອັອຨ ອັອນ ອັອຩ ອັອບ ອັອປ ອັອຜ ອັອຝ
ອັອພ ອັອຠ ອັອຟ ອັອມ ອັອຢ ອັອຣ ອັອລ ອັອຮ **(໑໖)**

໔໐. ອອກ ອອຂ ອອຄ ອອຆ ອອງ ອອຈ ອອສ ອອຊ
ອອຍ ອອຉ ອອຊ ອອຌ ອອຍ ອອຎ ອອດ ອອຑ ອອຕ
ອອຒ ອອຖ ອອຖ ອອຓ ອອທ ອອຘ ອອນ ອອຕ ອອບ
ອອປ ອອຜ ອອຝ ອອພ ອອຠ ອອຟ ອອມ ອອຢ ອອຣ
ອອລ ອອຬ **(ຝກ)**
໔໑.ເອຶອກ ເອຶອງ ເອຶອຍ ເອຶອດ ເອຶອນ ເອຶອບ ເອຶອມ**(ກ)**
໔໔.ເອືອກ ເອືອງ ເອືອຍ ເອືອດ ເອືອນ ເອືອບ ເອືອມ**(ກ)**

ສຣະ ປະສົມພຍັຎຊນະຈຳນວນ ໔໔ ໝວດ **ກ໔໔** ໂຕນີ້ ໃນພາສາລາວອາຈບ່ໄດ້ໃຊ້ຄົບທັງໝົດ, ແຕ່ທີ່ຍົກມາໃຫ້ເຫັນນີ້ ກໍ່ເພື່ອໃຫ້ເຫັນເຖິງຄວາມອຸດົມສົມບູຣຓ໌ຂອງພາສາລາວ ແລະໃຊ້ ທຽບກັບພາສາຂອງບັຣດາເຜົ່າຕ່າງໆ ແລະ ຂອງຊາຕອື່ນໆ ກໍ່ໃຫ້ມັນ ໄດ້ສດວກ.

ນອກນັ້ນຍັງແບ່ງເປັນສຣະສຽງສັ້ນແລະສຣະສຽງຍາວດັ່ງນີ້:

| ຣັສສຣະ(ສຣະສຽງສັ້ນ) | ທີຆສຣະ(ສຣະສຽງຍາວ) |
|---|---|
| ອະ | ອາ |
| ອິ | ອີ |
| ອຶ | ອື |
| ອຸ | ອູ |
| ເອະ | ເອ |
| ແອະ | ແອ |
| ໂອະ | ໂອ |
| ເອາະ | ອໍ |
| ເອິ | ເອີ |
| ເອຶອ | ເອືອ |
| ໄອ,ອັຍ | ອາຍ |
| ເອັຍ,ເອັຽ | ເອຍ,ເອຽ |
| ອໍາ,ອັມ | ອາມ |
| ອົວະ | ອົວ |
| ເອົາ | ອາວ |
| ແອັກ | ແອກ |
| ອຸກ | ອູກ |

| | |
|---|---|
| **ອັກ** | **ອາກ** |
| **ອິກ** | **ໂອກ** |
| **ເອັກ** | **ເອກ** |
| **ອຶກ** | **ອືກ** |
| **ອຶກ** | **ອືກ** |
| **ເອືອກ** | **ເອືອກ** |
| **ອັອກ** | **ອອກ** |
| **ອົວກ** | **ອວກ** |

ໃນນັ້ນ,ຍັງມີສະຣະພິເສດອີກ ໑ ໂຕຄື: **ໃອ** ເພາະບໍ່ມີຄູ່, ແຕ່ດຽວນີ້ມີ ໔ ໂຕຄື: ສະຣະ **ໄອ,ໃອ,ເອົາ,ອຳ.** ໃນນີ້ເຮົາ ເອົາສະຣະ **ໄອ(ອັຍ)** ຄູ່ກັບສະຣະ **ອາຍ,** ສະຣະ **ເອົາ** ຄູ່ກັບສະຣະ **ອາວ** ແລະ ສະຣະ **ອຳ(ອັມ)**ຄູ່ກັບສະຣະ **ອາມ** ກໍຖືວ່າເມາະສົມແລ້ວ.

**໔. <u>ສະຣະພິເສດມີ ໔ ໂຕຄື:</u> ຣ,ຣຕ໌** ອ່ານວ່າ(**ອອນ**) ເປັນສະຣະທີ່ມາຈາກກາສາປາລີເຊັ່ນ: ນຄຣ,ອຸດຣ,ລູກສຣ,ອຣຊຣ, ອໍຣຣ,ສັງວຣ,ອາວຣຕ໌,ອາກຣຕ໌,ອາກຣຕ໌,ປຜິສັງຂຣຕ໌,ປຜິມາກຣຕ໌, ສັງຫຣຕ໌,ພຍາກຣຕ໌,ໄວຍາກຣຕ໌ ຯລຯ

## ໓ ວັຕຍຸຕ:

ໃນກາສາລາວນອກຈາກມີພຍັນຊນະ ແລະ ສະຣະແລ້ວຍັງມີ ວັຕຍຸຕ ເພື່ອຜັນສຽງໃຫ້ສູງ,ຕ່ຳ,ຂຶ້ນ ແລະ ລົງຕາມຄວາມໝາຍ ຂອງຈັ້ນ,ຂັ້ນ ຫຼື ຊື່ຕ່າງໆຄື:

**ໄມ້ເອກ, ໄມ້ໂທ, ໄມ້ຕຣີ, ໄມ້ຈັຕ໌ວາ:**

| | | | | | |
|---|---|---|---|---|---|
| ໄມ້ເອກ | (x່) | ມາຈາກ | ເອກະ | ແປວ່າ | ໑ |
| ໄມ້ໂທ | (x້) | ,, | ທວິ | ,, | ໒ |
| ໄມ້ຕຣີ | (x໊) | ,, | ຕຣີ,ຕິ | ,, | ໓ |

ໄມ້ຈັດຕະວາ (x) ,, ຈຕຸ ,, ໔

## ໂຕຢ່າງການໃຊ້ວັນນະຍຸດ:

### ກ. ໃຊ້ກັບອັກສອນສູງ:

**ສາ** ບໍ່ມີໄມ້ຫຍັງ ເປັນສຽງສູງສົມດາ ເຊັ່ນ ສ້າງສາ,ສາລຸ ຯລຯ
**ສ່າ** ມີໄມ້ເອກ ເປັນສຽງເອກສູງ ,, ສ່າເຫຼົ້າ,ໝາກສ່າ ຯລຯ
**ສ້າ** ມີໄມ້ໂທ ເປັນສຽງໂທສູງ ,, ສ້າປາ,ສ້າກຸ້ງ ຯລຯ
**ສ໊າ** ມີໄມ້ຕີ ເປັນສຽງໂທ
**ສ໋າ** ມີໄມ້ຈັດຕະວາ ເປັນສຽງສົມດາ

### ຂ. ໃຊ້ກັບອັກສອນກາງ:

**ປາ** ບໍ່ມີໄມ້ຫຍັງ ເປັນສຽງຕ່ຳສົມດາ ເຊັ່ນ ໂຕປາ,ປາຄໍ່ ຯລຯ
**ປ່າ** ມີໄມ້ເອກ ເປັນສຽງເອກສູງ ,, ປ່າໄມ້,ປ່າເລົ່າຯລຯ
**ປ້າ** ມີໄມ້ໂທ ເປັນສຽງໂທຕ່ຳ ,, ປ້າຄຳມີ ຯລຯ
**ປ໊າ** ມີໄມ້ຕີ ເປັນສຽງເອກຕ່ຳ ,, ສຽງປືນດັງປ໊ງໆຯລຯ
**ປ໋າ** ມີໄມ້ຈັດຕະວາ ເປັນສຽງສູງສົມດາ ,, ປ໋າໂລ ຯລຯ

### ຄ. ໃຊ້ກັບອັກສອນຕ່ຳ:

**ຊາ** ບໍ່ມີໄມ້ຫຍັງ ເປັນສຽງຕ່ຳສົມດາ ເຊັ່ນ ໃບຊາ,ຢ່າຖືຊາ ຯລຯ
**ຊ່າ** ມີໄມ້ເອກ ເປັນສຽງເອກຕ່ຳ ,, ຊ່າລື ຯລຯ
**ຊ້າ** ມີໄມ້ໂທ ເປັນສຽງໂທຕ່ຳ ,, ຢ່າງຊ້າ,ກະຊ້າ ຯລຯ

## ໔ <u>ເຄື່ອງໝາຍວັດ:</u>

ໃນພາສາລາວ ນອກຈາກໂຕອັກສອນ,ໂຕເລກ ແລະ ວັນນະຍຸດ ແລ້ວຍັງໃຊ້ເຄື່ອງໝາຍວັດອີກ ເພື່ອຊ່ວຍໃນການອ່ານແຕ່ລະປະໂຫຍດ, ແຕ່ລະວັດ, ແຕ່ລະຕອນເປັນການສະດວກ ແລະ ຖືກຈັງວະ ເຄື່ອງໝາຍວັດທີ່ໃຊ້ໃນພາສາລາວມີດັ່ງນີ້:

. ເອີ້ນວ່າ **ຈ້ຳເມັດ** Full stop ຫຼື Period ໃຊ້ໝາຍບ່ອນໝົດປະໂຍຄ ຫຼື ໝົດວັຄ.

, ເອີ້ນວ່າ **ຈຸດ** Comma ໃຊ້ຂັ້ນຄວາມເພື່ອໃຫ້ຜູ້ອ່ານຢຸດພັກໜ້ອຍນຶ່ງແລ້ວຈຶ່ງອ່ານຕໍ່ (ຖ້າຈະໃຫ້ຜູ້ອ່ານຢຸດພັກຊົ່ວສັ້ນກວ່ານັ້ນອີກ ກໍບໍ່ຕ້ອງໃຊ້ເຄື່ອງໝາຍຈຸດ ແຕ່ໃຫ້ຂຽນຍະວ່າງແທນກໍໄດ້) ດຽວນີ້ນິຍົມການຂຽນໃຊ້ຍະວ່າງຫຼາຍກວ່າ.

; ເອີ້ນວ່າ **ຈ້ຳຈຸດ** Semicolon ໃຊ້ໝາຍບ່ອນຢຸດຕອນ ແຕ່ບໍ່ທັນໝົດເລື່ອງ ຫຼື ບໍ່ທັນໝົດວັຄ.

: ເອີ້ນວ່າ **ສອງຈ້ຳ** Colon ໃຊ້ໝາຍບອກໃຫ້ຮູ້ວ່າ ຈະມີແນວອ່ານຕໍ່ໄປອີກ (ເຄື່ອງໝາຍນີ້ໃຊ້ໝາຍເລຂຫານກໍໄດ້).

- ເອີ້ນວ່າ **ຂີດຕໍ່** Hyphen ໃຊ້ຂີດຂັ້ນຄຳໃດຄຳນຶ່ງໃນປະໂຍຄ ຫຼື ຂີດຕໍ່ສອງຄຳໃສ່ກັນ (ອາຈໃຊ້ຂີດຫົວແຖວ ຫຼື ໃຊ້ໝາຍເລຂລົບກໍໄດ້).

_ ເອີ້ນວ່າ **ຂີດກ້ອງ** Dash ໃຊ້ໝາຍຄວາມເວົ້າທີ່ຕ້ອງການເນັ້ນ.

... ເອີ້ນວ່າ **ສາມຈ້ຳ** Triple dots ໃຊ້ໝາຍໃຫ້ຮູ້ວ່າມີອັນຂຽນລົງບ່ອນນີ້ແຕ່ບໍ່ຂຽນ (ຈ້ຳນີ້ໃຫ້ຂຽນພຽງສາມຈ້ຳກໍພໍ).

? ເອີ້ນວ່າ **ໝາຍຖາມ** Question mark ໃຊ້ໝາຍໃຫ້ຮູ້ວ່າຄວາມເວົ້າທີ່ມີເຄື່ອງໝາຍນີ້ແມ່ນຄຳຖາມ.

! ເອີ້ນວ່າ **ໝາຍທ້ອງ** Exclamation mark ໃຊ້ໝາຍໃຫ້ຮູ້ວ່າຄວາມເວົ້ານັ້ນແມ່ນຄວາມແຜດຮ້ອນ, ຄວາມອັສຈັຣຍ໌, ຄວາມຕື່ນເຕັ້ນ, ຄວາມຕື່ນທ້ອງ, ຄວາມເຈັບໃຈ ຯລຯ.

" " ເອີ້ນວ່າ **ວົງຢືມ** Quotation mark ໃຊ້ໝາຍໃຫ້ຮູ້ວ່າຄວາມເວົ້າທີ່ຢູ່ໃນລະຫວ່າງສອງວົງນີ້ ແມ່ນຢືມເອົາຄວາມເວົ້າຂອງຜູ້ໃດຜູ້ນຶ່ງມາເວົ້າ.

**( )** ເອີ້ນວ່າ **ວົງເລັບ** Paranthese ໃຊ້ໝາຍຄວາມເວົ້າຊີ້ແຈງເພີ່ມໃສ່ຄວາມເວົ້າທີ່ຢູ່ກ່ອນວົງເລັບ.

**,,** ເອີ້ນວ່າ **ໝາຍລື້ມ** Double Comma ໃຊ້ຂີດໝາຍລົງກ້ອງຄວາມເວົ້າທີ່ຕ້ອງການເວົ້າລື້ມຄືນ ແຕ່ບໍ່ຢາກຂຽນຄວາມເກົ່າອີກ.

**ຯລຯ** ເອີ້ນວ່າ **ແລະອື່ນໆ** Etc (Etcetera) ໃຊ້ໝາຍໃຫ້ຮູ້ວ່າຍັງມີອັນອື່ນເວົ້າອີກ ແຕ່ຫາກບໍ່ຂຽນລົງໃສ່ບ່ອນນີ້.

**ໆ** ເອີ້ນວ່າ **ໝາຍຊ້ຳ** Repeat ໃຊ້ໝາຍໃຫ້ຮູ້ວ່າ ຄວາມເວົ້າກ່ອນນີ້ຕ້ອງເວົ້າຊ້ຳອີກເທື່ອນຶ່ງ.

## ໂຕຢ່າງການໃຊ້ເຄື່ອງໝາຍວັດ:

### ໃຊ້ຈ້ຳເມັດ (.) ແລະຈຸດ(,):

ການອອກແຮງງານຜລິຕຜົລຂອງມນຸษย໌ ບໍ່ພຽງແຕ່ຜລິຕຊັພຍ໌ສິນວັຕຖຸທີ່ຕ້ອງການໃຫ້ແກ່ການດຳຣົງຊີວິຕເທົ່ານັ້ນ, ແຕ່ຍັງເຮັດໃຫ້ສຕິປັญญາຂອງຄົນນັບມື້ນັບຂຍາຍໂຕ, ຄ່ອຍໆເປັນເຈົ້າລັທຊາຕ,ຄ່ອຍໆຄົ້ນພົບຄວາມຫຼັບຂອງລັທຊາຕອີກດ້ວຍ.

### ໃຊ້ຈ້ຳຈຸດ (;) ໝາຍບ່ອນຢຸດຕອນ:

ຈັກຣພັຕອເມຣິກາ ແລະ ລາວຂາຍຊາຕພ້ອມດ້ວຍລູກມືຂອງມັນແມ່ນສັຕຣູໂຕຮ້າຍກາຈຂອງປະຊາຊົນລາວ; ພວກມັນໃຊ້ກອງທຫານຫຸ່ນມາບຸກໂຈມຕີບຽດຢຶດ ເຂົ້າເຂຕປົດປ່ອຍຂອງ ບັຣດາກຳລັງຮັກຊາຕລາວ; ພວກມັນໃຊ້ເຮືອບິນຮົບຂອງອເມຣິກາ ມາຖິ້ມຣະເບີດຍິງທຳລາຍຊີວິຕ ແລະ ຊັພຍ໌ສິນຂອງປະຊາຊົນລາວ.

### ໃຊ້ສອງຈ້ຳ (:) ມີແນວອ່ານຕໍ່ໄປອີກ:

ຖແລງການຕ໌ຂອງສູນຍ໌ກາງແນວລາວຮັກຊາຕເວົ້າວ່າ: ເພື່ອຈະໃຫ້ມີສັນຕິກາພຢູ່ລາວນັ້ນ,ຈັກຣພັຕອເມຣິກາຕ້ອງປຜິບັຕ

ຕາມສັນຍາເຊີແຕວປີ **໑໙໖໔** ຢ່າງຖືກຕ້ອງຄື: ໂຄເຊົາການແຊກແຊງຮຸກຮານລາວ, ຖອນພນັກງານ, ທຫານ ແລະ ກອງທຫານພ້ອມທັງອາວຸດຍຸທໂສປກຣຕ໌ຂອງພວກມັນ ແລະ ລູກສມຸນຂອງມັນທີ່ພວກມັນເອົາເຂົ້າມາລາວຢ່າງຜິດກົດໝາຍນັ້ນ ອອກຈາກລາວໃຫ້ໝົດ.

**ໃຊ້ຂີດຕໍ່ (-)**

ພວກຫຸ່ນຂາຍຊາດ ທີ່ມາຕີນ້າງນຄຣຫຼວງວຽງຈັນທນ໌ເທື່ອທຳອິດ ແມ່ນພວກກູມີ ໜໍ່ສວັຣດ໌-ບຸນອູ້ມ; ພວກທີ່ມາຕີນ້າງນຄຣຫຼວງວຽງຈັນທນ໌ເທື່ອທີສອງ ແລະ ຂັບໄລ່ກູມີ ໜໍ່ສວັຣດ໌ ອອກຈາກດິນລາວແມ່ນ ກຸປສິທສິ໌ ອກັຍ-ຜຸຍ ຊຸນນິກຣ.

**ໃຊ້ຂີດກ້ອງ (_)**

ເພື່ອຢາກເອົາຊນະສັດຕຣູຂອງຊາດທີ່ກລ່າວມາຂ້າງບົນນີ້,ປະຊາຊົນລາວຕ້ອງສາມັຄຄີກັນແໜ້ນແຟ້ນ,ເດັດດ່ຽວຕໍ່ສູ້ ໂດຍເສຍສລະທຸກສິ່ງທຸກຢ່າງ.

**ໃຊ້ສາມຈ້ຳ (...)**

ປະຊາຊົນລາວຕ້ອງສາມັຄຄີແໜ້ນແຟ້ນ,ເດັດດ່ຽວຕໍ່ສູ້...

**ໃຊ້ໝາຍຖາມ (?)**

ສັດຕຣູຂອງປະຊາຊົນລາວແມ່ນໃຜ? ເປັນຫຍັງປະຊາຊົນລາວຈຶ່ງເດັດດ່ຽວຕໍ່ສູ້ກັບຈັກຣພັຕອເມຣິກາ ແລະ ລູກມືຂອງມັນ? ລູກມືຂອງມັນແມ່ນໃຜ? ນໂຍບາຍຂອງແນວລາວຮັກຊາດ ກັບນໂຍບາຍຂອງຈັກຣພັຕອເມຣິກາ ມັນຕ່າງກັນແນວໃດ ?

**ໃຊ້ໝາຍທ້ວງ (!)**

ໂຄ່ນລົ້ມອຳນາຈຫຸ່ນຂາຍຊາດ! ເດັດດ່ຽວທັບມ້າງເລ່ກົລກົ່ສົງຄາມຂອງຈັກຣພັຕອເມຣິກາ ແລະ ລູກມືຂອງມັນ! ປະຊາຊົນລາວສາ

ມັດຄືຕໍ່ສູ້ເດັດຂາດນີ້ຊຸ່ຍ! ປັດໂຊ! ທ່ານຫງຽງກ້າຫານແທ້ !.

**ໃຊ້ວົງຢືມ (“ ”)**

ທ່ານໄກສອນ ພົມວິຫານ ກ່າວວ່າ: **“ການທຳລາຍວັດທະນະທຳ ແມ່ນການທຳລາຍຊາດ”.**

**ໃຊ້ວົງເລັບ ()**

ຄຳຂວັນຂອງປະຊາຊົນລາວ: (ສັນຕິພາບ ເອກະລາດ ປະຊາ ທິປະໄຕ ເອກະພາບ ວັດທະນະຖາວອນ) ນັ້ນຕ້ອງປະຕິບັດໃຫ້ຄົບຖ້ວນ.

**ໃຊ້ເຄື່ອງໝາຍລື້ມ (,,)**

| | | | | |
|---|---|---|---|---|
| ເອ | ປະສົມ | ອະ | ເປັນ | ເອະ |
| ເອ | ,, | ອິ | ,, | ເອີ |
| ເອ | ,, | ອີ | ,, | ເອີ |
| ໂອ | ,, | ອະ | ,, | ໂອະ |
| ອໍ | ,, | ອາ | ,, | ອໍາ ຯລຯ |

**ໃຊ້ແລະອື່ນໆ (ຯລຯ)**

ເພິ່ນວ່າ ປະເທດລາວຮັ່ງມີກໍຍ້ອນວ່າ: ມັນມີບໍ່ເຫຼັກ,ບໍ່ທອງ, ບໍ່ຄຳ,ບໍ່ນາດ,ຖ່ານຫີນ,ປ່າໄມ້,ສັດປ່າ,ສັດລ້ຽງ ຯລຯ.

**ໃຊ້ໝາຍຊ້ຳ (ໆ)**

ພໍ່ແມ່ຮັກເຮົາແທ້ໆ ເພິ່ນຈຶ່ງສັ່ງສອນແຕ່ຄຸນງາມຄວາມດີຢູ່ເລື້ອຍໆ.

## ໕ ວ່າດ້ວຍການັນຕ໌:

ຄຳວ່າ:**ການັນຕ໌** ແມ່ນອັກສອນໂຕສຸດທ້າຍທີ່ບໍ່ອອກສຽງ ອັນມີໄມ້ **ທັນທະຄາດ** ຫຼື **ວັນຊະການ** ຢູ່ເທິງພະຍັນຊະນະ ທີ່ມີເຄົ້າມູນມາຈາກພາສາປາລີ-ສັນສະກິດ.

ໃນພາສາປາລີ-ສັນສະກິດນັ້ນ ຄຳເວົ້າຄຳນຶ່ງອອກສຽງເປັນ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ